# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາລານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

01-08 ກັນຍາ 2024

ປີທີ 13

ສະບັບທີ 984

ລາຍສັບປະດາ


## ກອງປະຊຸມຄົບຄະນະ ຄລຊ ປະຈຳເດືອນສິງຫາ 2024



(ສພຊ) - ກອງປະຊຸມຄົບຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ສະບັບປີ2015(ຄລຊ)ປະຈຳເດືອນສິງຫາ 2024 ໄດ້ຈັດຂຶ້ນໃນວັນທີ 23 ສິງຫາຜ່ານມາທີ່ສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ, ປະທານຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ສະບັບປີ 2015; ມີບັນດາທ່ານຮອງປະທານ, ຄະນະປະຈຳການ, ຫົວໜ້າອະນຸກຳມະການຕ່າງໆຂອງ ຄລຊ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ມີຄຳເຫັນວ່າ: ກອງປະຊຸມຄັ້ງນີ້ ເພື່ອຮັບຟັງການສະຫຼຸບການເຄື່ອນໄຫວວຽກງານ

ອ່ານຕໍ່ໜ້າ 3

## ເຝິກອົບຮົມທັກສະການບັນຊາກອງປະຊຸມສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ




ອ່ານຕໍ່ໜ້າ 3

## ຮຽບຮຽງກົດໝາຍ 3 ສະບັບ ຂົງເຂດສະພາແຫ່ງຊາດ

(ສພຊ) - ກອງປະຊຸມຮຽບຮຽງເນື້ອໃນກົດໝາຍ 3 ສະບັບ ຂົງເຂດສະພາແຫ່ງຊາດ (ສພຊ) ໄດ້ຈັດຂຶ້ນໃນວັນທີ 19-21 ສິງຫາ 2024 ທີ່ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ; ມີບັນດາທ່ານຮອງປະທານ ແລະ ກຳມະການຄະນະປະຈຳສະພາແຫ່ງຊາດ, ຮອງປະທານກຳມາທິການພາຍໃນສພຊ, ບັນດາຮອງຫົວໜ້າ, ຮອງລັດຖະມົນຕີຈາກກະຊວງ ແລະ ອົງການຈັດຕັ້ງພັກ-ລັດຂັ້ນສູນກາງທີ່ກ່ຽວຂ້ອງ, ຄະນະທີ່ປຶກສາທາງດ້ານກົດໝາຍພ້ອມດ້ວຍພະນັກງານຈາກພາກສ່ວນກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງຕົ້ນຕໍແມ່ນການຮຽບຮຽງເນື້ອໃນຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ແລະ ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ພາຍຫຼັງທີ່ໄດ້ຖືກຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສພຊ ຊຸດທີIX ເພື່ອໃຫ້ມີຄວາມຈະແຈ້ງ, ຮັດກຸມ, ສອດຄ່ອງກັບລັດຖະທຳມະນູນ ແລະ ກົດໝາຍອື່ນ ກ່ອນນຳສະເໜີກອງປະຊຸມຄະນະປະຈຳສະພາແຫ່ງຊາດ ພິຈາລະນາ ແລະ ນຳສະເໜີປະກາດໃຊ້ຕາມກົດໝາຍ.

ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ມີຄຳເຫັນກ່າວເປີດກອງປະຊຸມ ໂດຍໄດ້ເນັ້ນໜັກເຖິງຄວາມສຳຄັນຂອງການຮຽບຮຽງເນື້ອໃນ 3 ກົດໝາຍຂົງເຂດ

ອ່ານຕໍ່ໜ້າ 4

## ຍົກສູງຄວາມສາມາດພະນັກງານ ເພື່ອກຽມຮັບໃຊ້ກອງປະຊຸມໄອປາ ຄັ້ງທີ 45




(ສພຊ) - ກອງປະຊຸມເຝິກອົບຮົມຍົກສູງຂີດຄວາມສາມາດໃນການກະກຽມເນື້ອໃນ, ເຕັກນິກການພິມ ແລະ ດ້ານພະລາທິການຕ່າງໆ ເພື່ອກະກຽມຄວາມພ້ອມຮັບໃຊ້ກອງປະຊຸມໃຫຍ່ໄອປາຄັ້ງທີ 45 ໄດ້ຈັດຂຶ້ນໃນວັນທີ 20-23 ສິງຫາ 2024 ທີ່ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ, ເຂົ້າຮ່ວມມີຊ່ຽວຊານທີ່ມາຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (STEPs), ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP) ແລະ ກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ(ICPMS)ພ້ອມດ້ວຍບັນດາທ່ານຄະນະກົມ, ຄະນະພະ

ອ່ານຕໍ່ໜ້າ 3

## ຮອງປະທານສະພາແຫ່ງຊາດ ເຂົ້າຮ່ວມງານສັບປະດາການແລກປ່ຽນດ້ານການສຶກສາ ອາຊຽນ-ຈີນ ຄັ້ງທີ 17




ອ່ານຕໍ່ໜ້າ 4

## ພົທ. ສຸວອນ ເລືອງບຸນມີ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 7 ຢູ່ 4 ເມືອງຂອງແຂວງໄຊຍະບູລີ



(ສພຊ) - ລະຫວ່າງວັນທີ 19-23 ສິງຫາ 2024 ທ່ານ ພົທ. ສຸວອນ ເລືອງບຸນມີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 7 ແລະ ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນແຂວງ ໄຊຍະບູລີ ຊຸດທີ II ຢູ່ 8 ຈຸດ ຂອງ 4 ເມືອງຂອງແຂວງຄື: ບ້ານໜອງປາຈິດ ແລະ ສຳນັກເມືອງບໍ່ແຕນ, ບ້ານຫ້ວຍອີ່ຫຸມ ແລະ ສະໂມສອນເມືອງແກ່ນທ້າວ, ກອງພັນໃຫຍ່ 201 ນ້ຳພູນ ແລະ ສຳນັກເມືອງປາກລາຍ, ບ້ານໃໝ່ ແລະ ສຳນັກງານເມືອງທົ່ງມີໄຊ ໂດຍມີການນຳ, ພະນັກງານ-ລັດຖະກອນ, ນາຍ ແລະ ພົນທະຫານ-ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າພາຍໃນແຕ່ລະບ້ານ ແລະ ບ້ານເທດສະບານເມືອງ ເຂົ້າຮ່ວມຮັບຟັງຢ່າງຫຼວງຫຼາຍ.

ອ່ານຕໍ່ໜ້າ 3

## ເຝິກອົບຮົມວຽກງານໄອທີໃຫ້ພະນັກງານ ສພຊ ແລະ ສພຂ




(ສພຊ) - ກອງປະຊຸມເຝິກອົບຮົມວຽກງານໄອທີ ໃຫ້ແກ່ພະນັກງານ-ລັດຖະກອນພາຍໃນສະພາແຫ່ງຊາດ (ສພຊ) ແລະ ສະພາປະຊາຊົນແຂວງ (ສພຂ) 9 ແຂວງຄື: ນະຄອນຫຼວງວຽງຈັນ, ຜົ້ງສາລີ, ຫຼວງນ້ຳທາ, ອຸດົມໄຊ, ບໍ່ແກ້ວ, ຫຼວງພະບາງ, ໄຊຍະບູລີ, ຫົວພັນ ແລະ ຊຽງຂວາງ ໂດຍການເປັນປະທານຂອງທ່ານ ນາງ ອຳໄພວອນ ລ້ອມບຸນແພງ ເລຂາທິການສະພາແຫ່ງຊາດ ເຊິ່ງມີວິທະຍາກອນຈາກ ສພຊ, ກະ

ອ່ານຕໍ່ໜ້າ 2




ໂຄສະນາເກີນຈິງ... (ໜ້າ 9)



ສານສີລັງກາ... (ໜ້າ 11)




ມາດຕະການຄຸ້ມຄອງ... (ໜ້າ 12)

# ໜ່ວຍແມ່ຍິງຮາກຖານ ກວສຊ ສະຫຼຸບ ການປະຕິບັດວຽກງານ ນັບແຕ່ປີ 2018-ປັດຈຸບັນ



(ສພຊ) - ກອງປະຊຸມສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານນັບແຕ່ປີ 2018 ເຖິງປັດຈຸບັນ ຂອງໜ່ວຍແມ່ຍິງຮາກຖານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ (ກວສຊ) ໄດ້ຈັດຂຶ້ນໃນຕອນເຊົ້າວັນທີ 22 ສິງຫາຜ່ານມາ ໂດຍມີສະຫາຍ ສຸບັນ ສະວະບຸດ ຄະນະບໍລິຫານງານພັກສະພາແຫ່ງຊາດ, ເລຂາໜ່ວຍພັກຮາກຖານ ກວສຊ, ສະຫາຍ ນາງ ອຸດານາລີ ໄຊຍະສັກ ຄະນະບໍລິຫານງານສະຫະພັນແມ່ຍິງສະພາແຫ່ງຊາດ, ຄະນະໜ່ວຍພັກຮາກຖານ, ຕາງໜ້າອົງການຈັດຕັ້ງມະຫາຊົນພາຍໃນຮາກຖານ ແລະ ບັນດາສະມາຊິກແມ່ຍິງຮາກຖານກຳມາທິການດັ່ງກ່າວເຂົ້າຮ່ວມທັງໝົດ 13 ສະຫາຍ ຍິງ 7 ສະຫາຍ.

ກອງປະຊຸມໄດ້ຜ່ານບົດສະຫຼຸບການເຄື່ອນໄຫວວຽກງານນັບແຕ່ປີ 2018-2024 ແລະ ທິດທາງແຜນການ 5 ປີໃນຕໍ່ໜ້າ (2025-2029); ຜ່ານຂໍ້ຕົກລົງຂອງຄະນະບໍລິຫານງານສະຫະພັນແມ່ຍິງສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາຄະນະໜ່ວຍແມ່ຍິງຮາກຖານກຳມາທິການວຽກງານສະມາຊິກສະພາແຫ່ງຊາດຊຸດໃໝ່ ເຊິ່ງປະກອບມີສະຫາຍ ນາງ ເສົາວະພາ ພົນຈັນເຮືອງເປັນຫົວໜ້າ, ສະຫາຍ ນາງ ລັດດາພອນ ອຸ່ນນະລາດ ເປັນຮອງຫົວໜ້າ, ສະຫາຍ ນາງ ພັກສະລີ ປາທິລາດ ເປັນຄະນະ.

ສະຫາຍສຸບັນ ສະວະບຸດ ໄດ້ມີຄຳເຫັນໂອ້ລົມ-ຊີ້ນຳ ເຊິ່ງເນັ້ນໃຫ້ຄະນະໜ່ວຍແມ່ຍິງຮາກຖານຊຸດໃໝ່ພ້ອມກັບສະມາຊິກພາຍໃນໜ່ວຍ ເອົາໃຈໃສ່ບາງບັນຫາທີ່ສຳຄັນເປັນຕົ້ນ: ຈັດຕັ້ງປະຕິບັດພາລະບົດບາດ, ສິດແລະໜ້າທີ່ຂອງຕົນໃຫ້ເລິກເຊິ່ງ ໂດຍສະເພາະການປະຕິບັດຂໍ້ແຂ່ງຂັນ "ແມ່ຍິງ 3 ດີ" ຕິດພັນກັບຂະບວນການແຂ່ງຂັນ "ຮັກຊາດ ແລະ ພັດທະນາ" ແລະ ການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນຂອງໜ່ວຍພັກ, ສະມາຊິກພັກ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ; ປັບປຸງແບບແຜນການນຳພາໃນຂອບເຂດຄວາມຮັບຜິດຊອບຂອງຕົນໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ ໂດຍຍຶດໝັ້ນຫຼັກການນຳພາເປັນໝູ່ຄະນະ, ມີການແບ່ງງານ, ແບ່ງຄວາມຮັບຜິດຊອບໃຫ້ສະມາຊິກພາຍໃນໜ່ວຍຢ່າງຈະແຈ້ງ, ນຳພາ-ຊີ້ນຳ ພ້ອມທັງຕິດຕາມ ແລະ ຊຸກຍູ້ສະມາຊິກປະຕິບັດວຽກງານໃຫ້ໄດ້ທາງດ້ານປະລິມານແລະຄຸນນະພາບ; ເພີ່ມທະວີການຊຸກຍູ້ແລະສ້າງເງື່ອນໄຂໃຫ້ສະມາຊິກ ໄດ້ເຂົ້າຮ່ວມຂະບວນການຕ່າງໆທີ່ການຈັດຕັ້ງຈັດຂຶ້ນໃຫ້ຫຼາຍ, ໃຫ້ມີຂະບວນຟົດຟື້ນ, ຫ້າວຫັນ ແລະ ມີເນື້ອໃນຕິດພັນກັບການຈັດຕັ້ງປະຕິບັດວຽກວິຊາສະເພາະທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນໃຫ້ມີຜົນສຳເລັດແລະທັນຕາມກຳນົດເວລາ; ເພີ່ມທະວີການໄກ່ການປະສານສົມທົບລະຫວ່າງໜ່ວຍແມ່ຍິງຮາກຖານກຳມາທິການສະມາຊິກສະພາແຫ່ງຊາດກັບ ໜ່ວຍພັກຮາກຖານ, ໜ່ວຍແມ່ຍິງອ້ອມຂ້າງ ແລະ ຄະນະບໍລິຫານງານສະຫະພັນແມ່ຍິງສະພາແຫ່ງຊາດໃຫ້ມີຄວາມແໜ້ນແຟ້ນ, ເປັນລະບົບແລະຕໍ່ເນື່ອງ.

**(ອານຸສອນ ພູມມີທອນ)**

# ສ້າງຄວາມເຂັ້ມແຂງພາວະຜູ້ນຳ, ການຄຸ້ມຄອງ-ສຳເນົາ ແລະ ຮ່າງເອກະສານທາງການ, ມາລະຍາດທາງສັງຄົມ-ສາກົນ

(ສພຊ) - ເພື່ອຍົກສູງຂີດຄວາມສາມາດໃຫ້ແກ່ພະນັກງານສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ (ສນສ) ແລະ ສະພາປະຊາຊົນແຂວງ (ສພຂ) ແນໃສ່ເຮັດໃຫ້ສາມາດປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນມີປະສິດທິຜົນທັງເຮັດໃຫ້ພະນັກງານມີຄວາມຮັບຮູ້, ເຂົ້າໃຈບາງທັກສະພາວະການເປັນຜູ້ນຳ, ການຄຸ້ມຄອງ-ສຳເນົາເອກະສານ, ການຮ່າງເອກະສານທາງລັດຖະການແລະມາລະຍາດທາງສັງຄົມ-ມາລະຍາດສາກົນທີ່ມີຄວາມຈຳເປັນໃນການປະຕິບັດວຽກງານຕົວຈິງໃຫ້ມີຜົນສຳເລັດດີຂຶ້ນແລະເພື່ອແລກປ່ຽນ, ສົນທະນາກ່ຽວກັບບາງບົດຮຽນລະຫວ່າງວິທະຍາກອນ, ພະນັກງານ ສນສ ແລະ ສພຂ ທີ່ເປັນເສນາທິການ ແນໃສ່ຍົກລະດັບຄວາມຮັບຮູ້ແລະຄວາມສາມາດໃນການປະຕິບັດໜ້າທີ່ການເມືອງໃຫ້ມີປະສິດທິຜົນດີ. ໃນວັນທີ 19-21 ສິງຫາ 2024 ທີ່ເມືອງວັງວຽງ ແຂວງວຽງຈັນ ໄດ້ມີກອງປະຊຸມເຝິກອົບຮົມສ້າງຄວາມເຂັ້ມແຂງດ້ານພາວະການເປັນຜູ້ນຳ, ການຄຸ້ມຄອງ-ສຳເນົາເອກະສານ, ການຮ່າງເອ ກະສານທາງລັດຖະການ ແລະ ມາລະຍາດທາງສັງຄົມ-ມາລະຍາດສາກົນໃຫ້ແກ່ພະນັກງານສະຖາບັນຄົ້ນຄວ້ານິຕິກຳ ແລະສະພາປະຊາຊົນແຂວງ ໂດຍການເປັນປະທານຂອງທ່ານ ສິນທະລາ ຫຼ້າສຸກສະໄໝ ຫົວໜ້າສະຖາບັນຄົ້ນຄວ້ານິຕິກຳ; ເຂົ້າຮ່ວມມີບັນດາທ່ານຮອງຫົວໜ້າສະຖາບັນ, ວິທະຍາກອນຮັບເຊີນ, ສຳມະນາກອນຈາກ ສນສ ແລະ ສພຂ 9 ແຂວງຄື: ຜົ້ງສາລີ, ຫຼວງນ້ຳທາ, ອຸດົມໄຊ, ຫຼວງພະບາງ, ໄຊຍະບູລີ, ຄຳມ່ວນ, ສະຫວັນນະເຂດ, ສາລະວັນ ແລະ ໄຊສົມບູນ.



ທ່ານ ສິນທະລາ ຫຼ້າສຸກສະໄໝ ມີຄຳເຫັນວ່າ: ການເຝິກອົບຮົມຄັ້ງນີ້ ເປັນກອງປະຊຸມວິຊາການທີ່ມີຄວາມໝາຍສຳຄັນ ແລະ ຈຳເປັນຢ່າງພາວະວິໄສ ຕໍ່ພະນັກງານສະຖາບັນຄົ້ນຄວ້ານິຕິກຳແລະສະພາປະຊາຊົນແຂວງ ແນໃສ່ຍົກສູງຂີດຄວາມສາມາດໃຫ້ແກ່ສຳມະນາກອນທີ່ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໃຫ້ມີປະສິດທິຜົນ ເພື່ອເປັນເສນາທິການມີຄວາມຊຳນານງານ-ຊ່ຽວຊານ ແລະ ເປັນມືອາຊີບ. ຕະຫຼອດໄລຍະການເຄື່ອນໄຫວໜ້າທີ່ວຽກງານຕົວຈິງ ເຊິ່ງວ່າບັນດາທ່ານລ້ວນແຕ່ມີບົດຮຽນ, ປະສົບປະການ ບໍ່ວ່າຈະເປັນການເຂົ້າຮ່ວມເຝິກອົບຮົມ, ຍົກລະດັບໃນແຕ່ລະຂັ້ນ; ແຕ່ການເຂົ້າຮ່ວມຍົກລະດັບຄວາມຮັບຮູ້ ກໍຄືການສ້າງຄວາມເຂັ້ມແຂງຄັ້ງນີ້ ຖືວ່າເປັນການຮຽນຮູ້ເອົາບົດຮຽນ, ຫຼັກການອັນໃໝ່ໆຈາກວິທະຍາກອນຜູ້ທີ່ມີບົດຮຽນ, ປະສົບການໃນການສິດສອນ ກໍຄືການລົງເລິກວຽກງານອັນສະເພາະຢ່າງຫຼາກຫຼາຍ ແລະ ເປັນໂອກາດດີທີ່ຈະໄດ້ແລກປ່ຽນຄວາມເຫັນ, ຖອດຖອນບົດຮຽນ ແລະ ປະສົບການເຊິ່ງກັນແລະກັນ, ທັງນີ້ ກໍເພື່ອຖ່າຍທອດໃຫ້ແກ່ພະນັກງານເສນາທິການ ກໍຄືພະນັກງານຜູ້ສືບທອດ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ກໍຄືສະຖາບັນຄົ້ນຄວ້ານິຕິກຳ ແລະ ສະພາປະຊາຊົນແຂວງ ໃນປັດຈຸບັນ ແລະ ຕໍ່ໜ້າ.

ຜູ້ເຂົ້າຮ່ວມໄດ້ຮັບຟັງບົດຮຽນ: ທັກສະພາວະການເປັນຜູ້ນຳທີ່ດີ ສະເໜີໂດຍທ່ານ ຣສ. ປອ. ບົວດຳ ແສງຄຳຄູດລາວົງ ອະດີດຫົວໜ້າຫ້ອງການມະຫາວິທະຍາໄລແຫ່ງຊາດ; ການຄຸ້ມຄອງ-ສຳເນົາເອກະສານ ແລະ ການຮ່າງເອກະສານທາງລັດຖະການສະເໜີໂດຍທ່ານແສງດາວເດດ ກັດຕິຍະສັກ ຮອງຫົວໜ້າກົມເອກະສານແຫ່ງຊາດ, ກະຊວງພາຍໃນ; ມາລະຍາດທາງສັງຄົມ-ມາລະຍາດສາກົນ ສະເໜີໂດຍທ່ານ ຈັນໄຊ ສຸລິພົນ ຫົວໜ້າພະແນກ, ກົມພິທີການທູດ, ກະຊວງການຕ່າງປະເທດ. ຈາກນັ້ນ, ກໍໄດ້ສົນທະນາແລກປ່ຽນຄຳຄິດຄຳເຫັນຢ່າງຈິງຈັງ ແລະ ກົງໄປກົງມາຕໍ່ເນື້ອໃນແຕ່ລະຫົວຂໍ້ ເຮັດໃຫ້ການເຝິກອົບຮົມບັນລຸຜົນສຳເລັດຕາມແຜນການທີ່ວາງໄວ້.

ກອງປະຊຸມຄັ້ງນີ້ນຳໃຊ້ງົບປະມານສົມທົບຂອງມູນນິທິເອເຊຍ (The Asia Foundation-TAF) ແລະ ຄະນະເລຂາທິການສະພາແຫ່ງຊາດ.

**(ນາງ ສຸພາວັນ ທອນສະນິດ)**



## ເຝິກອົບຮົມ...

(ຕໍ່ຈາກໜ້າ 1)

ຊວງເຕັກໂນໂລຊີ ແລະ ການສື່ສານ, ທີ່ປຶກສາວຽກງານໄອຊີທີປະຈຳໂຄງການສະເຕັບສ໌ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ; ທັງນີ້, ກໍເພື່ອການຫັນເປັນດີຈີຕອນເທື່ອລະກ້າວ ໂດຍສະເພາະແມ່ນການນຳໃຊ້ລະບົບໄອທີ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ເຂົ້າໃນການປະຕິບັດໜ້າທີ່ວຽກງານຂອງພະນັກງານ-ລັດຖະກອນ ສພຊ ແລະສພຂ ໃຫ້ມີຄວາມວ່ອງໄວ, ທັນສະໄໝຂຶ້ນ.

ບັນດາຜູ້ເຂົ້າຮ່ວມໄດ້ຮັບຟັງການແນະນຳລະບຽບການຄຸ້ມຄອງ, ນຳໃຊ້ຫ້ອງປະຊຸມສະພາແຫ່ງຊາດແລະສິ່ງອຳນວຍຄວາມສະດວກດ້ານອຸປະກອນໄອທີ; ການສ້າງຄວາມເຂັ້ມແຂງດ້ານວຽກງານໄອຊີທີໃຫ້ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງຕາມບູລິມະສິດການຫັນເປັນທັນສະໄໝຂອງສະພາແຫ່ງຊາດ;ການນຳໃຊ້ລະບົບຈັດເກັບແລະການນຳໃຊ້ຂໍ້ມູນຮ່ວມກັນຂອງພາກລັດ (G-Share, G-Drive); ການນຳໃຊ້ລະບົບສື່ສານພາກລັດ (G-Chat); ການຕິດຕັ້ງແອັບພລິເຄຊັນ G-Share, G-Drive ແລະ G-Chat ຜ່ານທາງໂທລະສັບມືຖືສະມາດໂຟນ ແລະ ແທັບເລັດ (tablet); ລະບົບບໍລິການພາກລັດປະຕູດຽວ (Gov-X). ຈາກນັ້ນ, ກໍໄດ້ແລກປ່ຽນຖາມ-ຕອບຢ່າງກົງໄປກົງມາ ທັງໄດ້ລົງທະບຽນສະໝັກເຂົ້ານຳໃຊ້, ທົດລອງນຳໃຊ້ຕົວຈິງໃນການເຂົ້າລະບົບ, ຊອກຄົ້ນບັນດາຂໍ້ມູນທີ່ຕ້ອງການ, ວິທີບຳລຸງຮັກສາລະບົບດັ່ງກ່າວໃຫ້ມີຄວາມປອດໄພ ເພື່ອເຮັດໃຫ້ສາມາດເຂົ້າໃຈຢ່າງຈະແຈ້ງ ແລະ ນຳໃຊ້ໄດ້ຢ່າງຄ່ອງຕົວ ເພື່ອຈະສືບຕໍ່ນຳເອົາບົດຮຽນໃນຄັ້ງນີ້ ໄປເຝິກຕໍ່ໃຫ້ແກ່ພະນັກງານ-ລັດຖະກອນໃນຂົງເຂດຂອງຕົນສາມາດຮັບປະກັນໃນການຄົ້ນຄວ້າ ແລະ ສະໜອງຂໍ້ມູນໃຫ້ມີຄວາມວ່ອງໄວ ແລະ ໄດ້ຮັບຂໍ້ມູນຖືກຕ້ອງ.

ການເຝິກອົບຮົມຄັ້ງນີ້ຈັດຂຶ້ນທີ່ເມືອງວັງວຽງ ແຂວງວຽງຈັນ ໃນວັນທີ 24-26 ສິງຫາ 2024 ໂດຍໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼືສະເຕັບສ໌ (STEPs) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ ສົມທົບກັບງົບປະມານຂອງຄະນະເລຂາທິການສະພາແຫ່ງຊາດ.

**(ອານຸສອນ ພູມມີທອນ)**



## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ໄລຍະຜ່ານມາຂອງຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນແລະທິດທາງແຜນການຮອດເດືອນທັນວາ 2024, ບົດລາຍງານການປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນສະບັບປີ 2015 ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນໃນທົ່ວປະເທດ, ແຜນການຈັດກອງປະຊຸມວິທະຍາສາດກ່ຽວກັບການປັບປຸງລັດຖະທຳມະນູນແລະບົດລາຍງານກ່ຽວກັບການປະເມີນການຈັດຕັ້ງປະຕິບັດລັດຖະທຳມະນູນ ຕໍ່ກອງປະຊຸມກົມການເມືອງສູນກາງພັກ ໃນທ້າຍເດືອນສິງຫາ 2024; ເພື່ອເຮັດໃຫ້ດ້ານເນື້ອໃນຂອງບົດສະຫຼຸບ, ແຜນການກອງປະ ຊຸມວິທະຍາສາດ ກໍຄືບົດລາຍງານທີ່ຈະໄປຂໍທິດຊີ້ນຳຈາກກອງປະຊຸມກົມການເມືອງສູນກາງພັກ ມີຄວາມຄົບຖ້ວນ, ຮັດກຸມ ສະເໜີໃຫ້ຜູ້ເຂົ້າຮ່ວມຈົ່ງສຸມສະຕິປັນຍາຄົ້ນຄວ້າ, ປະກອບຄວາມເຫັນຢ່າງກົງໄປກົງມາ, ສ້າງສັນ ແລະ ກ້າວໄປເຖິງຄວາມເປັນເອກະພາບຕໍ່ເນື້ອໃນ ເພື່ອເປັນບ່ອນອີງໃຫ້ແກ່ການປັບປຸງລັດຖະທຳມະນູນ ສະບັບປີ 2015.

**(ສອນສັກ ວັນວິໄຊ)**



## ຍົກສູງ...

(ຕໍ່ຈາກໜ້າ 1)

ແນກ ແລະ ພະນັກງານຈາກແຕ່ລະອະນຸກຳມະການທີ່ຈະຮັບໃຊ້ກອງປະຊຸມໃຫຍ່ໄອປາຄັ້ງທີ45.

ໃນກອງປະຊຸມດັ່ງກ່າວ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໄດ້ໃຫ້ກຽດມີຄຳເຫັນໂອ້ລົມ ເຊິ່ງໄດ້ເນັ້ນໜັກເຖິງຄວາມຈຳເປັນ ແລະ ຄວາມສຳຄັນຂອງການເຝິກອົບຮົບໃນຄັ້ງນີ້ ແລະ ຮຽກຮ້ອງໃຫ້ບັນດາສຳມະນາກອນເອົາໃຈໃສ່ຮ່ຳຮຽນ, ແລກປ່ຽນປະສົບການ ແລະ ຖອດຖອນບົດຮຽນນຳບັນດາຊ່ຽວຊານທີ່ມີປະສົບການສູງຈາກກອງເລຂາໄອປາ ແລະ ບາງປະເທດອາຊຽນເຊັ່ນ:ສສ.ຫວຽດນາມ, ຟີລິບປິນ, ໄທ ແລະ ມາເລເຊຍ ເພື່ອເຮັດໃຫ້ ການຮັບໃຊ້ກອງປະຊຸມໃຫຍ່ໄອປາຄັ້ງທີ 45 ທີ່ ສປປ ລາວ ເປັນເຈົ້າພາບ ໄດ້ຮັບຜົນສຳເລັດສູງສຸດ, ອັນຈະເປັນການຍົກສູງຖານະບົດບາດຂອງ ສປປ ລາວ ໃນເວທີພາກພື້ນ ແລະ ສາກົນ ໃຫ້ສູງຂຶ້ນຢ່າງບໍ່ຢຸດຢັ້ງ.

ໃນການເຝິກອົບຮົມ, ສຳມະນາກອນໄດ້ຮຽນຮູ້ບັນຫາສຳຄັນຄື:ຄວາມເປັນມາຂອງໄອປາ; ການກະກຽມກອງປະຊຸມສາກົນໂດຍສະເພາະກອງປະຊຸມໄອປາ; ປະສົບການຂອງລັດຖະສະພາໃນປະເທດອາຊຽນ;ບົດສະເໜີກ່ຽວກັບກອງປະຊຸມສະມັດຊາໃຫຍ່ໄອປາຄັ້ງທີ45: ວາລະ, ຂັ້ນຕອນ ແລະ ຫຼັກການ; ປະສົບການໃນການຈັດກອງປະຊຸມກຳມາທິການສະມາຊິກລັດຖະສະພາເພດຍິງ ແລະສະມາຊິກລັດຖະສະພາໜຸ່ມຂອງໄອປາ;ຄວາມເຂົ້າໃຈກ່ຽວກັບມະຕິຂອງກອງປະຊຸມໄອປາ: ຈຸດປະສົງ, ຄວາມເປັນມາ, ໂຄງສ້າງ, ຂັ້ນຕອນ ແລະ ບົດອະທິບາຍ ເພື່ອຍົກສູງປະສິດທິພາບຂອງການເຝິກອົບຮົມ. ບັນດາສຳມະນາກອນຍັງໄດ້ແບ່ງກຸ່ມເພື່ອເຝິກການເຮັດບົດບາດຂອງເຈົ້າໜ້າທີ່ໃນການອຳນວຍຄວາມສະດວກກອງປະຊຸມໄອປາ ເຊັ່ນ: ການກະກຽມແຜນວຽກຕ່າງໆກ່ອນກອງປະຊຸມຂອງແຕ່ລະອະນຸກຳມະການ, ການກະກຽມມະຕິກອງປະຊຸມໄອປາ ແລະບົດອະທິບາຍ, ການກຳນົດເອກະສານ ແລະ ອຸປະກອນ, ການກະກຽມຮ່າງມະຕິ ແລະ ໜ້າວຽກຕ່າງໆຂອງຄະນະຮັບຜິດຊອບ ແລະ ອື່ນໆ. ບັນດາສຳມະກອນໄດ້ມີຄວາມຫ້າວຫັນເອົາໃຈໃສ່ຮຽນຮູ້ແລະເຝິກເຮັດຕົວຈິງກັບວິທະຍາກອນ ເພື່ອແລກປ່ຽນປະສົບການ ແລະ ສາມາດນຳເອົາບົດຮຽນຈາກການເຝິກອົບຮົມຄັ້ງນີ້ໝູນໃຊ້ເຂົ້າໃນການຮັບໃຊ້ການເປັນເຈົ້າພາບກອງປະຊຸມໃຫຍ່ສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ ຄັ້ງທີ 45 ໃຫ້ສຳເລັດຜົນຕາມລະດັບຄາດໝາຍທີ່ວາງໄວ້.

**(ຂ່າວ: ບຸນເກີດ ວົງໄຊຍາ, ພາບ:ນາງສຸພາວັນທອມສະນິດ)**

## ເຝິກອົບຮົມ...

(ຕໍ່ຈາກໜ້າ 1)

(ສພຊ) - ກອງປະຊຸມເຝິກອົບຮົມທັກສະໃນການບັນຊາກອງປະຊຸມໃຫ້ແກ່ພະນັກງານນຳພາ-ຄຸ້ມຄອງຂັ້ນສູງຂອງ 6 ກຳມາທິການຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ 8 ແຂວງ: ນະຄອນຫຼວງວຽງຈັນ, ຜົ້ງສາລີ, ຫຼວງນ້ຳທາ, ອຸດົມໄຊ, ບໍ່ແກ້ວ, ຫຼວງພະບາງ, ໄຊຍະບູລີ ແລະ ບໍລິຄຳໄຊ ໄດ້ຈັດຂຶ້ນໃນວັນທີ26-27 ສິງຫາ 2024 ທີ່ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ເຊິ່ງທ່ານປະທານກອງປະຊຸມໄດ້ມີຄຳເຫັນເນັ້ນໜັກເຖິງຈຸດປະສົງຕົ້ນຕໍຂອງການເຝິກອົບຮົມຄັ້ງນີ້ ແມ່ນເພື່ອບຳລຸງຍົກລະດັບທັກສະການບັນຊາກອງປະຊຸມໃຫ້ແກ່ພະນັກງານນຳພາ-ຄຸ້ມຄອງຂັ້ນສູງຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເຊິ່ງຈະເປັນໂອກາດດີທີ່ໄດ້ແລກປ່ຽນຄວາມເຫັນ, ຖອດຖອນບົດຮຽນ ແລະ ປະສົບການເຊິ່ງກັນແລະກັນ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ການນຳຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງໃນປັດຈຸບັນ ແລະ ຕໍ່ໜ້າ.



ບັນດາທ່ານການນຳຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໄດ້ຮັບຟັງການສະເໜີ 2 ຫົວຂໍ້ຄື: ທັກສະໃນການບັນຊາກອງປະຊຸມຕາມພາລະບົດບາດຂອງສະພາແຫ່ງຊາດ ກໍຄືສະພາປະຊາຊົນຂັ້ນແຂວງ ສະເໜີໂດຍທ່ານ ປອ. ນາງ ສູນທອນ ໄຊຍະຈັກ ແລະ ການບັນຊາກອງປະຊຸມທົ່ວໄປ ສະເໜີໂດຍທ່ານ ສີພຸກ ວົງພັກດີ ອະດີດຮອງລັດຖະມົນຕີກະຊວງພາຍໃນ. ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ມີການສົນທະນາແລກປ່ຽນຄຳຄິດຄຳເຫັນນຳກັນຢ່າງກົງໄປກົງມາ, ຟົດຟື້ນ, ມີການຍົກເອົາບົດຮຽນໃນການບັນຊາກອງປະຊຸມຢູ່ໃນເຂດເລືອກຕັ້ງຕ່າງໆ ມາແລກປ່ຽນນຳກັນ ອັນເຮັດໃຫ້ບັນ ດາທ່ານທີ່ເຂົ້າຮ່ວມກອງປະຊຸມ ສາມາດໄດ້ຮຽນຮູ້ຕໍ່ປະສົບການຕົວຈິງຫຼາຍຂຶ້ນ, ເປັນການສ້າງຄວາມເຂັ້ມແຂງແກ່ການນຳຂອງສະພາແຫ່ງຊາດ ແລະສະພາປະຊາຊົນຂັ້ນແຂວງ.

**(ນາງ ອານິຕາ ມ່ວນສະຫວັດ)**

## ພົທ. ສຸວອນ...

(ຕໍ່ຈາກໜ້າ 1)

ຫຼັງຈາກຮັບຟັງບົດລາຍງານການຈັດຕັ້ງປະຕິບັດວຽກງານຂອງເມືອງໂດຍຫຍໍ້, ທ່ານ ພົທ. ສຸວອນ ເລືອງບຸນມີ ກໍໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສພຊ ຊຸດທີ IX ເຊິ່ງທ່ານໃຫ້ຮູ້ວ່າ: ກອງປະຊຸມຄັ້ງນີ້ ດຳເນີນແຕ່ວັນທີ 10 ມິຖຸນາ ຫາ 02 ກໍລະກົດ 2024 ລວມ 17 ວັນ ໄດ້ພິຈາລະນາ, ຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດ ເຊິ່ງບັນດາເນື້ອໃນທີ່ນຳເອົາເຂົ້າຜ່ານຮັບຮອງໃນກອງປະຊຸມຄັ້ງນີ້ລວມມີ 3 ພາກ (3 ຂົງເຂດວຽກງານ) ຄື: ຂົງເຂດວຽກງານຂອງລັດຖະບານ, ຂົງເຂດວຽກງານອົງການກວດສອບແຫ່ງລັດ ແລະ ຂົງເຂດວຽກງານຂອງສະພາແຫ່ງຊາດ ໂດຍອອກເປັນມະຕິ 6 ສະບັບ ແລະ ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ 13 ສະບັບ ໃນນີ້, ກົດໝາຍສ້າງໃໝ່ 2 ສະບັບຄື: ຮ່າງກົດໝາຍວ່າດ້ວຍຊັບພະຍາກອນທີ່ເປັນຢາ ແລະ ຮ່າງກົດໝາຍວ່າດ້ວຍສະຫະກອນ; ກົດໝາຍປັບປຸງ 11 ສະບັບຄື: 1) ກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານເຊື້ອເອັດຈ໌ໄອວີ/ພະຍາດເອດ, 2) ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, 3) ກົດໝາຍວ່າດ້ວຍການຕ້ານສະກັດກັ້ນການຟອກເງິນ ແລະການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, 4) ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ, 5) ກົດໝາຍວ່າດ້ວຍການທ່ອງທ່ຽວ, 6) ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ, 7) ກົດໝ າຍວ່າດ້ວຍສະກັດກັ້ນແລະຕ້ານອັກຄີໄພ, 8.) ກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ, 9) ກົດໝາຍວ່າດ້ວຍສະພາແຫ່ງຊາດ, 10) ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, 11) ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ວຽກງານສະພາແຫ່ງຊາດໃນໄລຍະແຕ່ກອງປະຊຸມສະໄໝສາມັນເທື່ອທີ 6 ຫາເທື່ອທີ 7 ແລະ ແຜນການເຄື່ອນໄຫວຮອດກອງປະຊຸມສະໄໝສາມັນເທື່ອທີ 8. ພ້ອມນັ້ນ, ທ່ານຍັງໄດ້ກ່າວຕື່ມອີກວ່າ: ການເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ7 ຂອງສະພາແຫ່ງຊາດຊຸດທີ IX ໄດ້ສະແດງໃຫ້ເຫັນສະພາບຄວາມເປັນຈິງຂອງການພັດທະນາເສດຖະກິດ-ສັງຄົມ ໃນໄລຍະ 6 ເດືອນຕົ້ນປີ ທີ່ເຕັມໄປດ້ວຍຄວາມຫຍຸ້ງຍາກແລະສິ່ງທ້າທາຍອັນເນື່ອງມາຈາກຜົນກະທົບຈາກປັດໄຈພາຍນອກ ແລະ ພາຍໃນ ຕົ້ນຕໍແມ່ນມາຈາກປັດໄຈພາຍໃນຂອງພວກເຮົາເອງ; ມະຕິເລກທີ 137/ສພຊ, ລົງວັນທີ 02/7/2024 ທັງມີລັກສະນະເປັນນິຕິກຳ, ທັງມີລັກສະນະຮຽກຮ້ອງໃຫ້ລັດຖະບານສືບຕໍ່ຕັ້ງໜ້າ, ອອກແຮງຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ໃຫ້ບຸກທະລຸແຂງແຮງກວ່າເກົ່າ ໂດຍປຸກລະດົມກຳລັງແຮງຂອງທົ່ວປວງຊົນເຂົ້າຮ່ວມ, ເຮັດໃຫ້ບັນຫາເຄັ່ງຮ້ອນທີ່ເປັນສິ່ງທ້າທາຍໜັກໜ່ວງໄດ້ຮັບການແກ້ໄຂຄ່ອຍໆກັບຄືນສູ່ສະພາບປົກກະຕິ.

ຫຼັງຈາກນັ້ນ, ໄດ້ຮັບຟັງບັນຫາ, ຂໍ້ສະເໜີ, ຄວາມຂັດຂ້ອງໝອງໃຈຈາກພະນັກງານ-ລັດຖະກອນ ເຊິ່ງບາງບັນຫາກໍໄດ້ຕອບກັບທີ່, ສ່ວນບັນຫາທີ່ກ່ຽວຂ້ອງກັບຫຼາຍພາກສ່ວນ ກໍຈະນຳໄປສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງແກ້ໄຂໃນໂອກາດຕໍ່ໄປ.

ທ່ານ ພົທ. ສຸວອນ ເລືອງບຸນມີ ໄດ້ສະແດງຄວາມຊົມເຊີຍຕໍ່ຜົນງານຮອບດ້ານທີ່ແຕ່ລະເມືອງສາມາດຍາດມາໄດ້ໃນໄລຍະຜ່ານມາທັງສະແດງຄວາມຂອບໃຈຕໍ່ການຕ້ອນຮັບຢ່າງອົບອຸ່ນ ແລະ ຕີລາຄາສູງຕໍ່ການປະກອບສ່ວນໃນການປົກປັກຮັກສາແລະພັດທະນາປະເທດຊາດຕະຫຼອດມາ; ພ້ອມທັງສະແດງຄວາມເປັນຫ່ວງເປັນໄຍຕໍ່ພໍ່ແມ່ປະຊາຊົນ ກໍຄືພະນັກງານ-ລັດຖະກອນ ທີ່ພວມປະສົບຢູ່ກັບບັນຫາເຄັ່ງຮ້ອນໃນທົ່ວສັງຄົມ, ວຽກງານການສຶກສາ ໂດຍສະເພາະອັດຕາການປະລະການຮຽນທີ່ນັບມື້ນັບສູງຂຶ້ນ ແລະຮຽກຮ້ອງໃຫ້ເອົາໃຈໃສ່ສືບຕໍ່ສາມັກຄີກັນ, ຮັກສາສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບໂດຍພື້ນຖານ, ສ້າງເສດຖະກິດມີການຂະຫຍາຍຕົວ ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າໄດ້ຮັບການຍົກສູງຂຶ້ນເປັນກ້າວໆ.

**(ນາງ ອາລິນ ສຸພົມມະປະດິດ)**






## ຮອງປະທານ...

(ຕໍ່ຈາກໜ້າ 1)

(ສພຊ) - ໃນວັນທີ 20-22 ສິງຫາຜ່ານມາ, ທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມງານສັບປະດາການແລກປ່ຽນດ້ານການສຶກສາ ອາຊຽນ-ຈີນ ປະຈຳປີ 2024 ທີ່ນະຄອນກຸ້ຍຢາງ, ແຂວງກຸ້ຍໂຈວ, ສາທາລະນະລັດປະຊາຊົນຈີນ ເຊິ່ງມີຜູ້ຕາງໜ້າຂົງເຂດການສຶກສາຂອງບັນດາປະເທດສະມາຊິກອາຊຽນເຂົ້າຮ່ວມ.

ທ່ານ ຄຳໃບ ດຳລັດ ໄດ້ຕາງໜ້າຄະນະຜູ້ແທນ ກໍຄືສະພາແຫ່ງຊາດລາວ ຂຶ້ນມີຄຳເຫັນຕໍ່ພິທີເປີດງານດັ່ງກ່າວ ເຊິ່ງໄດ້ຕີລາຄາສູງຕໍ່ງານສັບປະດາຄັ້ງນີ້ ແມ່ນການຊຸກຍູ້ໃຫ້ບັນດາປະເທດອາຊຽນ ແລະ ສປຈີນ ສົ່ງເສີມການພົວພັນຮ່ວມມື, ແລກປ່ຽນດ້ານການສຶກສາ, ຍົກສູງການນຳໃຊ້ລະບົບດິຈິຕອນໃນການສຶກສາ, ຮ່ວມມືດ້ານການຄົ້ນຄວ້າວິທະຍາສາດ, ແລກປ່ຽນວັດທະນະທຳອັນດີງາມ ແລະ ກິລາ, ແລກປ່ຽນລະຫວ່າງປະຊາຊົນກັບປະຊາຊົນ ແລະ ອື່ນໆ ໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ຈາກຂະໜາດນ້ອຍເປັນຂະໜາດໃຫຍ່, ຫັນປ່ຽນຮູບແບບການສຶກສາສະເພາະ ເປັນເວທີແລກປ່ຽນວັດທະນະທຳມະນຸດ, ຮູບແບບການຮ່ວມມື ກໍໄດ້ມີການພັດທະນາຂະຫຍາຍກວ້າງອອກໄປເຖິງບັນດາປະເທດລຽບຕາມແລວການຈັດຕັ້ງປະຕິບັດຂໍ້ລິເລີ່ມ "ໜຶ່ງແລວ ໜຶ່ງເສັ້ນທາງ"; ພ້ອມດຽວກັນນີ້, ງານສັບປະດາການແລກປ່ຽນດ້ານສຶກສາ ອາຊຽນ-ຈີນ ຍັງຈັດຕັ້ງຜັນຂະຫຍາຍຂໍ້ລິເລີ່ມໃນການສ້າງສະຫະພັນການສຶກສາອາຊີບ, ການສຶກສາດິຈິຕອນ, ສະຖາບັນທີ່ມີສີສັນ ແລະ ອື່ນໆ ລະຫວ່າງອາຊຽນແລະສປຈີນເພື່ອເສີມສ້າງສັນຕິພາບ, ຄວາມສະຫງົບ, ຄວາມຈະເລີນຮຸ່ງເຮືອງ, ຄວາມສວຍງາມ ແລະ ມິດຕະພາບ ໃຫ້ນັບມື້ເຕີບໃຫຍ່ຂະຫຍາຍຕົວຍິ່ງໆຂຶ້ນ.

ສປປລາວ ຍາມໃດກໍຖືສຳຄັນວຽກງານການສຶກສາ ຖືເປັນວຽກງານໃຈກາງຂອງການພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບ, ມີລັກສະນະຊາດ, ວິທະຍາສາດ, ມະຫາຊົນ ແລະທັນສະໄໝ, ຕອບສະໜອງການພັດທະນາເສດຖະກິດ-ສັງຄົມໃຫ້ຍືນຍົງ, ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ, ການເຊື່ອມໂຍງ-ເຊື່ອມຈອດໃນພາກພື້ນ ແລະ ສາກົນ; ໃນນາມເປັນສະມາຊິກອາຊຽນ, ສປປ ລາວ ໄດ້ເຂົ້າຮ່ວມຢ່າງຕັ້ງໜ້າໃນການຊຸກຍູ້ສາຍພົວພັນມິດຕະພາບ ແລະ ການເປັນຄູ່ຮ່ວມຍຸດທະສາດຮອບດ້ານ ລະຫວ່າງອາຊຽນ-ຈີນດ້ວຍການເຄົາລົບຫຼັກການພື້ນຖານຂອງການພົວພັນສາກົນ, ຮ່ວມມືກັນຕ່າງຝ່າຍຕ່າງມີຜົນປະໂຫຍດ.

ການເຄື່ອນໄຫວຄັ້ງນີ້, ຄະນະໄດ້ພົບປະສະຫາຍ ຕິງ ຈົງຫຼີ ຮອງປະທານສະພາຜູ້ແທນປະຊາຊົນທົ່ວປະເທດແຫ່ງ ສປຈີນ ເຊິ່ງສະຫາຍໄດ້ສະແດງຄວາມຂອບໃຈ ແລະ ຕີລາຄາສູງຕໍ່ຄະນະຜູ້ແທນສະພາແຫ່ງຊາດລາວທີ່ໄດ້ເຂົ້າຮ່ວມງານສັບປະດາການແລກປ່ຽນດ້ານການສຶກສາ ອາຊຽນ-ຈີນ ຄັ້ງທີ 17 ປະຈຳປີ 2024; ສະຫາຍ ຄຳໃບ ດຳລັດ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນ ແລະ ຕີລາຄາສູງຕໍ່ການເປັນເຈົ້າພາບຈັດງານສັບປະດາການແລກປ່ຽນດ້ານການສຶກສາ ອາຊຽນ-ຈີນ ປະຈຳປີນີ້. ສອງຝ່າຍມີຄວາມພາກພູມໃຈເປັນຢ່າງຍິ່ງທີ່ເຫັນວ່າ ສປປ ລາວ ແລະ ສປຈີນ ເປັນປະເທດເພື່ອນມິດສະຫາຍ, ບ້ານໃກ້ເຮືອນຄຽງ ທີ່ມີສາຍພູແລະແມ່ນ້ຳຕິດຈອດກັນ, ມີສາຍພົວພັນທີ່ເປັນມູນເຊື້ອມາແຕ່ບູຮານນະການ ເຊິ່ງຜ່ານມາ ການນຳຂັ້ນສູງທັງສອງປະເທດ ໂດຍແມ່ນສະຫາຍ ສີ ຈິ້ນຜິງ ເລຂາທິການໃຫຍ່, ປະທານປະເທດແຫ່ງ ສປຈີນ ແລະ ສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່, ປະທານປະເທດແຫ່ງສປປລາວ ໄດ້ລົງນາມໃນແຜນແມ່ບົດສະບັບໃໝ່ ວ່າດ້ວຍການສ້າງຄູ່ຮ່ວມຊາຕາກຳ ຈີນ-ລາວ, ລາວ-ຈີນເຊິ່ງເປັນພື້ນຖານອັນໜັກແໜ້ນໃຫ້ການພົວພັນຮ່ວມມືລະຫວ່າງສອງພັກ, ສອງລັດ ກໍຄືປະຊາຊົນສອງປະເທດ ໃນຍຸກສະໄໝໃໝ່; ພ້ອມດຽວກັນນັ້ນ ໃນປີ 2024 ແມ່ນປີແຫ່ງການໄປມາຫາສູ່ກັນລະຫວ່າງບັນດາປະເທດອາຊຽນ ແລະສປຈີນເຊິ່ງຈະເປັນໂອກາດອັນດີໃນການຊຸກຍູ້ການຮ່ວມມືໃນຂະແໜງການເສດຖະກິດ, ການຄ້າ-ການລົງທຶນ, ການສຶກສາ, ການພັດທະນາລະບົບພື້ນຖານໂຄງລ່າງ, ການທ່ອງທ່ຽວ ແລະ ຂະແໜງການອື່ນໆ ເພື່ອເປັນກຳລັງແຮງປະກອບສ່ວນສຳຄັນເຂົ້າໃນການກໍ່ສ້າງການເປັນຄູ່ຮ່ວມຍຸດທະສາດຮອບດ້ານ ອາຊຽນ-ຈີນເວົ້າລວມ, ເວົ້າສະເພາະແມ່ນຄູ່ຮ່ວມຊາຕາກຳ ລະຫວ່າງລາວ-ຈີນ, ຈີນ-ລາວ ໃຫ້ນັບມື້ນັບພັດທະນາຍິ່ງໆຂຶ້ນ.

ຄະນະຍັງໄດ້ຢ້ຽມຢາມ ພົບປະສະຫາຍ ຊຸ ລິນ ເລຂາພັກແຂວງ, ປະທານສະພາປະຊາຊົນແຂວງກຸ້ຍໂຈວ ເຊິ່ງສະຫາຍໄດ້ສະແດງຄວາມຍິນດີຕ້ອນຮັບ ແລະຕີລາຄາສູງຕໍ່ການມາຢ້ຽມຢາມ ແລະເຮັດວຽກຂອງຄະນະຜູ້ແທນສະພາແຫ່ງຊາດລາວໃນຄັ້ງນີ້, ພ້ອມທັງແຈ້ງສະພາບການພັດທະນາເສດຖະກິດ-ສັງຄົມຂອງແຂວງໃຫ້ຊາບ; ແຂວງກຸ້ຍໂຈວ ພ້ອມຈະຮ່ວມກັບບັນດາແຂວງຂອງສປປລາວສືບຕໍ່ການໄປມາຫາສູ່, ລົງເລິກການຮ່ວມມືໃນຂົງເຂດເສດຖະກິດ-ການຄ້າ, ການລົງທຶນ, ການສຶກສາ, ການກະສິກຳ, ການທ່ອງທ່ຽວ ແລະ ຂົງເຂດອື່ນໆ ເພື່ອນຳເອົາຄວາມຈະເລີນສີວິໄລມາສູ່ປະຊາຊົນສອງຊາດແລະປະກອບສ່ວນກໍ່ສ້າງການເປັນປະຊາຄົມຄູ່ຮ່ວມຊາຕາກຳ ຈີນ-ລາວ ໃຫ້ນັບມື້ນັບປາກົດຜົນເປັນຈິງ.

ສະຫາຍ ຄຳໃບ ດຳລັດ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນດ້ວຍໄມຕີຈິດມິດຕະພາບແລະຕີລາຄາສູງຕໍ່ການເປັນເຈົ້າພາບຈັດງານສັບປະດາການແລກປ່ຽນດ້ານການສຶກສາ ອາຊຽນ-ຈີນ ຄັ້ງທີ 17 ປະຈຳປີ 2024; ຕີລາຄາສູງຕໍ່ການພົວພັນມິດຕະພາບ ລາວ-ຈີນ ກໍຄືການພົວພັນມິດຕະພາບລະຫວ່າງແຂວງກັບແຂວງ, ເມືອງກັບເມືອງ ໂດຍສະເພາະແຂວງຫຼວງນ້ຳທາ, ແຂວງຈຳປາສັກ ກັບ ແຂວງກຸ້ຍໂຈວ. ພ້ອມກັນນັ້ນ, ກໍຊຸກຍູ້ໃຫ້ບັນດາແຂວງຂອງ ສປປ ລາວ ກັບ ແຂວງກຸ້ຍໂຈວ ມີການພົວພັນ ແລະ ຮ່ວມມືທາງດ້ານການສຶກສາ, ການທ່ອງທ່ຽວ, ວັດທະນະທຳ-ສັງຄົມ ແລະ ອື່ນໆ ໃຫ້ໄດ້ຮັບການພັດທະນາຍິ່ງໆຂຶ້ນ.

ທ່ານຮອງປະທານສະພາແຫ່ງຊາດລາວ ຍັງໄດ້ໃຫ້ສຳພາດຕໍ່ສື່ມວນຊົນຈີນ ເປັນຕົ້ນ: ສຳນັກຂ່າວປະຊາຊົນຈີນ, ສຳນັກຂ່າວຊິນຮວາ, ສຳນັກຂ່າວຈິ່ງຊິນ ແລະ ສຳນັກຂ່າວກຸ້ຍໂຈວ ກ່ຽວກັບການເປັນປະທານໝູນວຽນອາຊຽນຂອງ ສປປ ລາວ; ການຂຶ້ນກ່າວປາໄສໃນພິທີເປີດງານສັບປະດາການແລກປ່ຽນດ້ານການສຶກສາ ອາຊຽນ-ຈີນ ແລະ ການພົວພັນຮ່ວມມືລະຫວ່າງ ສປປ ລາວ ແລະແຂວງກຸ້ຍໂຈວ ໃນອະນາຄົດ.

ນອກຈາກນັ້ນ, ຄະນະຜູ້ແທນຍັງໄດ້ເຄື່ອນໄຫວຢ້ຽມຢາມເຂດທ່ອງທ່ຽວເມືອງບູຮານຊິງຢ້ຽນແລະສູນເຝິກອົບຮົມການຄົມມະນາຄົມທາງລົດໄຟແຂວງກຸ້ຍໂຈວ ອີກດ້ວຍ.



## ຮຽບຮຽງ...

(ຕໍ່ຈາກໜ້າ 1)

ສະພາແຫ່ງຊາດ (ສະບັບປັບປຸງ) ຕາມການປະກອບຄຳເຫັນຂອງບັນດາທ່ານສະມາຊິກສະພາແຫ່ງຊາດ ໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດທີ IX ຄັ້ງວັນທີ 24 ມິຖຸນາ 2024 ເຊິ່ງຄະນະຮັບຜິດຊອບປັບປຸງ 3 ກົດໝາຍດັ່ງກ່າວ ກໍໄດ້ຄົ້ນຄວ້າພິຈາລະນາປັບປຸງສຳເລັດໂດຍພື້ນຖານ ແລະ ໃນວັນທີ 28 ມິຖຸນາ 2024 ກອງປະຊຸມສະໄໝສາມັນເທື່ອທີ 7 ໄດ້ພິຈາລະນາຮັບຮອງເອົາດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍແລ້ວ.

ໃນການຮຽບຮຽງທັງ 3 ກົດໝາຍນັ້ນ, ບັນດາຜູ້ແທນທີ່ເຂົ້າຮ່ວມໄດ້ຍົກສູງຄວາມຮັບຜິດຊອບຂອງຕົນໃນການຮຽບຮຽງ ເຮັດໃຫ້ເນື້ອໃນມີຄວາມຈະແຈ້ງ, ຊັດເຈນຂຶ້ນກວ່າເກົ່າ ເຊິ່ງສາມາດນຳລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດແລະກ້າວໄປເຖິງການປະກາດໃຊ້ໃນຕໍ່ໜ້າ.

**(ນາງ ກຸກກິກ ບຸດດາໄຊ)**

# ຕິດຕາມກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຢູ່ແຂວງຜົ້ງສາລີ




(ສພຊ) - ວັນທີ 13 ສິງຫາ 2024, ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຜົ້ງສາລີ ໄດ້ຈັດກອງປະຊຸມຕິດຕາມກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດກົດໝາຍ ແລະນິຕິກຳໃຕ້ກົດໝາຍກ່ຽວກັບການເຮັດທຶດລອງຊັບສິນດິຈິຕອນ ແລະການດຳເນີນຊື້-ຂາຍເງິນຄຣິບໂຕ ຢູ່ແຂວງຜົ້ງສາລີ. ໂດຍການເປັນປະທານຮ່ວມຂອງທ່ານ ປອ. ເກດແກ້ວ ສີຫາລາດ ຮອງປະທານກຳມາທິການເສດຖະກິດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມສະພາແຫ່ງຊາດແລະທ່ານ ສົມຈິດ ທັບລະກອນ ຮອງປະທານຄະນະປະຈຳສະພາປະຊາຊົນແຂວງຜົ້ງສາລີ, ມີບັນດາທ່ານສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 2 ທີ່ເປັນກຳມະການສັງກັດກຳມາທິການເສດຖະກິດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ, ສະມາຊິກສະພາປະຊາຊົນແຂວງ, ມີບັນດາພະແນກການ, ອົງການກ່ຽວຂ້ອງ, ລັດວິສາຫະກິດໄຟຟ້າລາວ ສາຂາແຂວງຜົ້ງສາລີ ຄະນະກຳມະການ, ພະນັກງານ-ວິຊາການ ທີ່ກ່ຽວຂ້ອງຂອງສະພາປະຊາຊົນແຂວງເຂົ້າຮ່ວມ.

ກອງປະຊຸມ ໄດ້ຮັບຟັງຕາງໜ້າຈາກພະແນກພະແນກເຕັກໂນໂລຊີແລະສິ່ງແວດລ້ອມ, ພະແນກພະລັງງານ ແລະ ບໍ່ແຮ່, ພະແນກການເງິນ, ລັດວິສາຫະກິດໄຟຟ້າລາວ ສາຂາແຂວງຜົ້ງສາລີລາຍງານກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບການເຮັດທຶດລອງຊັບສິນດິຈິຕອນ ແລະ ການດຳເນີນຊື້-ຂາຍ ເງິນຄຣິບໂຕ; ຮັບຟັງພະແນກໂຍທາທິການ ແລະ ຂົນສົ່ງ, ພະແນກແຜນການ ແລະ ການລົງທຶນ ລາຍງານການຈັດຕັ້ງປະຕິບັດການກໍ່ສ້າງ, ບູລະນະສ້ອມແປງເສັ້ນທາງ ແລະ ພັດທະນາຂະຫຍາຍໂຄງລ່າງພື້ນຖານທີ່ຈຳເປັນເຊື່ອມຈອດເຂົ້າສູ່ເລວທາງເສດຖະກິດຢູ່ແຂວງຜົ້ງສາລີ; ຮັບຟັງພະແນກພະລັງງານ ແລະ ບໍ່ແຮ່ແຂວງລາຍງານກ່ຽວກັບສະພາບການຂົນສົ່ງແຮ່ຢູ່ພາຍໃນແຂວງຜົ້ງສາລີ. ຈາກນັ້ນ, ຜູ້ແທນກອງປະຊຸມກໍໄດ້ແລກປ່ຽນແລກບົດຮຽນ, ປະກອບຄຳຄິດຄຳເຫັນກົງໄປກົງມາ ດ້ວຍຄວາມຮັບຜິດຊອບສູງ, ເພື່ອເປັນຂໍ້ມູນທີ່ສຳຄັນໃຫ້ກຳມາທິການ ໄດ້ສັງລວມເພື່ອຊອກໃຫ້ເຫັນດ້ານດີທີ່ຄວນເສີມຂະຫຍາຍ ແລະ ບັນຫາທີ່ຄົງຄ້າງ ທີ່ຈະຕ້ອງຊອກຫາວິທີການແກ້ໄຂ ໃນການຈັດຕັ້ງປະຕິບັດບັນດາກົດໝາຍ, ນິຕິກຳໃຕ້ກົດໝາຍ ທີ່ພົວພັນກັບວຽກງານດັ່ງກ່າວ.

ກອງປະຊຸມໄດ້ດຳເນີນເປັນເວລາເຄິ່ງວັນ ແລະອັດລົງດ້ວຍຜົນສຳເລັດຕາມລະດັບຄາດໝາຍ. ນອກຈາກນີ້, ຄະນະສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງຂັ້ນແຂວງ ຍັງໄດ້ລົງເຄື່ອນໄຫວຕິດຕາມກວດກາຕົວຈິງຢູ່ພາກສະໜາມຢູ່ບໍລິສັດເອເຊຍ ລົງທຶນ ແລະ ບໍລິການ ຈຳກັດຜູ້ດຽວຮ່ວມກັບບໍລິສັດປີຊາໄຊ ຖຸຣົ້ນ ຈຳກັດຜູ້ດຽວ ຢູ່ເຂດບ້ານຊີງໄຊເມືອງບຸນໃຕ້ແຂວງຜົ້ງສາລີ.

# ແຂວງຫຼວງນ້ຳທາ ປາຖະກະຖາ 3 ວັນປະຫວັດສາດ



(ສພຊ) - ວັນທີ 15 ສິງຫາ 2024 ທີ່ຫໍວັດທະນະທຳແຂວງຫຼວງນ້ຳທາ, ໄດ້ປາຖະກະຖາ 3 ວັນປະຫວັດສາດຄື: ວັນປະກາດໃຊ້ລັດຖະທຳມະນູນແຫ່ງຊາດ ສປປ ລາວ ຄົບຮອບ 33 ປີ (15 ສິງຫາ 1991-ສິງຫາ 2024); ວັນຍຶດອຳນາດທົ່ວປະເທດ ສປປ ລາວ ຄົບຮອບ 79 ປີ (23 ສິງຫາ 1945-23 ສິງຫາ 23 ສິງຫາ 2024) ແລະ ວັນສ້າງຕັ້ງແນວລາວສ້າງຊາດ ຄົບຮອບ 74 ປີ (13 ສິງຫາ 1950-13ສິງຫາ2024) ໂດຍການເຂົ້າຮ່ວມຂອງທ່ານ ຈັນທອງ ແກ້ວປະເສີດ ຮອງເລຂາພັກແຂວງ ຫົວໜ້າຄະນະຈັດຕັ້ງແຂວງ, ມີກຳມະການພັກແຂວງ, ຫົວໜ້າ-ຮອງຫົວໜ້າພະແນກ, ສອງກອງບັນຊາການ, ອະດີດການນຳແຂວງ, ພະນັກງານ-ລັດຖະກອນອ້ອມຂ້າງແຂວງ ຕະຫຼອດຮອດປະຊາຊົນ 8 ບ້ານເທສະບານແຂວງເຂົ້າຮ່ວມທັງໝົດ 600 ກວ່າຄົນ.

ໃນພິທີ ທ່ານ ມີໄຊ ມີວິໄລ ກຳມະການຄະນະປະຈຳສະພາປະຊາຊົນແຂວງ ເລຂາທິການສະພາປະຊາຊົນແຂວງ ໄດ້ໃຫ້ຮູ້ວ່າ ພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍຢ່າງສົມບູນ ແລະ ສະຖາປະນາ ສປປ ລາວ ຂຶ້ນ ໃນວັນທີ2ທັນວາ1975ເຊິ່ງແມ່ນຜົນງານ ແລະ ໄຊຊະນະອັນຍິ່ງໃຫຍ່ທີ່ສຸດຂອງປວງຊົນລາວບັນດາເຜົ່າທີ່ຍາດມາໄດ້; ເປັນການໄຂສັງກາດໃໝ່, ສັງກາດທີ່ປະເທດຊາດມີເອກະລາດ ແລະ ປະຊາຊົນມີອິດສະລະພາບຢ່າງແທ້ຈິງ ພາຍໃຕ້ການຊີ້ນຳ-ນຳພາຂອງພັກປະຊາຊົນ ປະຕິວັດລາວ ໄດ້ເຮັດຫຼ້ອນໜ້າທີ່ປະຫວັດສາດອັນມີກຽດສະຫງ່າຂອງຕົນ; ຈາກນັ້ນ, ການປະຕິວັດພວກເຮົາ ໄດ້ກ້າວເຂົ້າສູ່ໄລຍະໃໝ່ ເຊິ່ງແມ່ນໄລຍະແຫ່ງການປະຕິບັດ 2 ໜ້າທີ່ຍຸດທະສາດຄື: ປົກປັກຮັກສາ ແລະ ສ້າງສາປະເທດຊາດ ເຊິ່ງກໍເປັນເວລາອັນຍາວນານສົມຄວນທີ່ພວກເຮົາຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ໂດຍການນຳໃຊ້ມະຕິ, ຄຳສັ່ງ, ບໍ່ທັນມີລັດຖະທຳມະນູນ ແລະ ກົດໝາຍເປັນບ່ອນອີງ. ມາຮອດປີ 1989 ພັກເຮົາໄດ້ດຳເນີນການເລືອກຕັ້ງສະພາປະຊາຊົນສູງສຸດ ຊຸດທີ II ຂຶ້ນ ເຊິ່ງເປັນສະພາທີ່ເຮັດໜ້າທີ່ຮ່າງລັດຖະທຳມະນູນສະບັບທຳອິດແຫ່ງ ສປປ ລາວ. ດັ່ງນັ້ນ, ລັດຖະທຳມະນູນ ຈຶ່ງຖືເປັນຮາກເຫງົ້າ ໃນການປ່ຽນແປງລະບົບການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍມະຕິຄຳສັ່ງ ມາເປັນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍລັດຖະທຳມະນູນ ແລະ ກົດໝາຍເທື່ອລະກ້າວ; ລັດຖະທຳມະນູນແຫ່ງ ສປປ ລາວ ໄດ້ຖືກຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນສູງສຸດ ຊຸດທີ II ໃນປີ 1991 ແລະ ໄດ້ປະກາດໃຊ້ຢ່າງເປັນທາງການໃນວັນທີ 15 ສິງຫາ 1991. ມາເຖິງປັດຈຸບັນ ລັດຖະທຳມະນູນແຫ່ງ ສປປ ລາວ ໄດ້ມີການປັບປຸງມາແລ້ວ 2 ຄັ້ງ;ລັດຖະທຳມະນູນແມ່ນມີຄວາມໝາຍສຳຄັນຫຼາຍຕໍ່ປະເທດຊາດ ກໍຄືປວງຊົນລາວທັງຊາດ ເພາະເປັນການຮັບຮູ້ເອກະລາດ, ອຳນາດອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນ, ຄວາມເປັນເອກະພາບຂອງປະຊາຊົນບັນດາເຜົ່າ; ເປັນການຍົກສູງສະຕິຊາດ,ນ້ຳໃຈຮັກຊາດ,ຮັກລະບອບໃໝ່,ເພີ່ມທະວີຄວາມສາມັກຄີປວງຊົນທັງຊາດ, ເຊີດຊູບົດບາດເປັນເຈົ້າການໃນການປົກປັກຮັກສາແລະສ້າງສາພັດທະນາປະເທດຊາດຕາມຈຸດໝາຍຂອງພັກກຳນົດໄວ້, ເປັນເຫດການການເມືອງທີ່ສຳຄັນຂອງຊາດ, ທັງເປັນຂີດໝາຍແຫ່ງການຫັນໄປສູ່ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍກົດໝາຍເທື່ອລະກ້າວ ແລະ ສ່ອງແສງໃຫ້ເຫັນເຖິງລັກສະນະທາດແທ້, ການເຕີບໃຫຍ່ຂະຫຍາຍຕົວ ຂອງລະບອບປະຊາທິປະໄຕປະຊາຊົນລາວ ພາຍໃຕ້ການນຳພາອັນຖືກຕ້ອງຂອງພັກປະຊາຊົນ ປະຕິວັດລາວ ທັງເປັນການຢັ້ງຢືນຕໍ່ຊາວໂລກໃຫ້ຮັບຮູ້ເຖິງຄວາມເປັນເອກະລາດ ອຳນາດປະຊາທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງ ສປປ ລາວ.

ທ່ານ ສິງໄຊ ວັນຄຳ ກຳມະການພັກແຂວງ ຫົວໜ້າຄະນະໂຄສະນາອົບຮົມແຂວງ ໄດ້ປາຖະກະຖາວັນຍຶດອຳນາດທົ່ວປະເທດ ສປປ ລາວ ຄົບຮອບ 79 ປີ ຊາດລາວເປັນຊາດໜຶ່ງທີ່ມີປະຫວັດສາດແຫ່ງການກໍ່ຕັ້ງອັນສະຫງ່າງາມ ແລະ ໄດ້ຖືກປົກປັກຮັກສາເປັນເວລາຫຼາຍພັນປີມາແລ້ວ, ສະຕະວັດທີ 14 ເຈົ້າຟ້າງຸ່ມ ໄດ້ທ້ອນໂຮມເມືອງລາວບູຮານສ້າງເປັນອານາຈັກລ້ານຊ້າງ-ສະຕະວັດທີ 16 ອານາຈັກລ້ານຊ້າງ ຖືກສັກດີນາຕ່າງດ້າວມາຮຸກຮານແລະເອົາເປັນເມືອງສ່ວຍຂອງຝຣັ່ງແລະຈັກກະພັດອາເມຣິກາ ວັນທີ 2 ທັນວາ 1975 ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ໄດ້ໄຂຂຶ້ນຢ່າງສະຫງ່າຜ່າເຜີຍຢູ່ນະຄອນຫລວງວຽງຈັນ, ກອງປະຊຸມໄດ້ເປັນເອກະສັນກັນຜ່ານມະຕິອັນເປັນປະຫວັດການ: ຕົກລົງລົບລ້າງລະບອບລາຊາທິປະໄຕ ທີ່ຫຼ້າສະໄໝ ແລະ ສະຖາປະນາລະບອບ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ, ສ້າງຕັ້ງສະພາປະຊາຊົນສູງສຸດ, ແຕ່ງຕັ້ງປະທານປະເທດ ແລະ ສ້າງຕັ້ງລັດຖະບານ ສປປ ລາວ, ກຳນົດທຸງຊາດ, ເພງຊາດ ແລະ ພາສາທາງການ. ເປັນປະຫວັດໃນການຍຶດອຳນາດຂັ້ນສຸດທ້າຍຂອງການປະຕິວັດລາວ ເຊິ່ງໄດ້ຈາລຶກໃນປຶ້ມປະຫວັດສາດຂອງຊາດລາວ. ວັນຍຶດອຳນາດ 23ສິງຫາປີ1975 ຈຶ່ງມີຄວາມຫມາຍຄວາມສຳຄັນຫລາຍສຳລັບປະຊາຊົນລາວທັງຊາດເພາະວ່າມັນແມ່ນໄຊຊະນະຂອງກຳລັງແຮງ ແຫ່ງຄວາມສາມັກຄີເປັນຈິດໜຶ່ງໃຈດຽວກັນຂອງປວງຊົນທັງຊາດ, ຄວາມເປັນອັນໜຶ່ງອັນດຽວກັນຂອງກອງທັບ ແລະ ປະຊາຊົນລາວບັນດາເຜົ່າ, ແມ່ນໄຊຊະນະຂອງຄວາມສາມັກຄີຮ່ວມສຳພັນສູ້ຮົບລະຫວ່າງ ປະຊາຊົນລາວ,ປະຊາຊົນຫວຽດນາມ ແລະປະຊາຊົນກຳປູເຈຍທີ່ໄດ້ຄຽງບ່າຄຽງໄຫລ່ກັນ ຕ້ານສັດຕູໂຕດຽວກັນຕະຫລອດໄລຍະການປະຕິວັດ ປົດປ່ອຍຊາດໃນເມື່ອກ່ອນ ກໍຄືໃນພາລະກິດປົກປັກຮັກສາ ແລະ ກໍ່ສ້າງປະເທດຊາດໃນປັດຈຸບັນ ແລະ ປາຖະກະຖາວັນປະກາດໃຊ້ລັດຖະທຳມະນູນແຫ່ງຊາດ ສປປ ລາວ ຄົບຮອບ 33 ປີ ລັດຖະທຳມະນູນແຫ່ງ ສປປ ລາວ ແມ່ນການຫັນເອົາແນວທາງນະໂຍບາຍໃໝ່ຢ່າງຮອບດ້ານແລະມີຫຼັກການຂອງພັກປະຊາຊົນປະຕິວັດລາວ ມາເປັນພື້ນຖານຂອງລະບອບປະຊາທິປະໄຕ ປະຊາຊົນ ແລະ ມີຄວາມສຳຄັນເປັນຢ່າງຍິ່ງຕໍ່ຊີວິດການເມືອງປວງຊົນລາວທັງຊາດ, ມາເຖິງປັດຈຸບັນ ລັດຖະທຳມະນູນແຫ່ງ ສປປ ລາວ ໄດ້ມີການປັບປຸງມາແລ້ວ 2 ຊຶ່ງໄດ້ເຮັດໃຫ້ລັດຖະທຳມະນູນຂອງ ສປປ ລາວ ມີເນື້ອໃນຄົບຖ້ວນ ແລະ ສົມບູນກວ່າເກົ່າ. ພ້ອມນັ້ນຍັງໄດ້ຮັບຟັງທວນຄືນມູນເຊື້ອຂອງອົງການແນວລາວສ້າງຊາດ ເນື່ອງໃນໂອກາດຄົບຮອບ 74 ປີ ຕື່ມອີກ.

# ປະທານ ສປນວ ພົບປະຜູ້ມີສິດເລືອກຕັ້ງ ຢູ່ເມືອງສັງທອງ




(ສພຊ) - ໃນວັນທີ 14 ສິງຫາ 2024, ທ່ານ ອານຸພາບ ຕຸນາລົມ ປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 1, ປະທານສະພາປະຊາຊົນນະຄອນຫຼວງວຽງຈັນ (ສປນວ) ພ້ອມດ້ວຍຄະນະ ໄດ້ລົງພົບປະພະນັກງານອ້ອມຂ້າງເມືອງ ແລະ ນາຍບ້ານທົ່ວເມືອງສັງທອງ ເພື່ອເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສປນວ ຊຸດທີ II ຢູ່ຫ້ອງວ່າການປົກຄອງເມືອງສັງທອງ ໂດຍການຕ້ອນຮັບຂອງທ່ານ ພົງສະຫວັນ ສີລິພົນ ເຈົ້າເມືອງໆສັງທອງ,ບັນດາທ່ານຮອງເຈົ້າເມືອງ ພ້ອມດ້ວຍຄະນະນຳຂອງເມືອງຈຳນວນໜຶ່ງ.

ໃນໂອກາດນີ້, ຄະນະໄດ້ຮັບຟັງການລາຍງານສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງເມືອງ ໂດຍຫຍໍ້ຈາກທ່ານເຈົ້າເມືອງເປັນຕົ້ນ: ການຈັດຕັ້ງປະຕິບັດການເກັບລາຍຮັບເຂົ້າງົບປະມານ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ວຽກພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ເຊິ່ງທົ່ວເມືອງສັງທອງມີບ້ານພົ້ນທຸກ 35 ບ້ານ ກວມເອົາຮ້ອຍສ່ວນຮ້ອຍ, ມີຄອບຄົວພົ້ນທຸກ 6,287 ຄອບຄົວ, ຍັງບໍ່ພົ້ນທຸກ 360 ຄອບຄົວ, ໄດ້ສຸມໃສ່ວຽກງານສ້າງບ້ານໃຫຍ່ກາຍເປັນຕົວເມືອງນ້ອຍໃນຊົນນະບົດໃນ02ບ້ານຈຸດສຸມ ໂດຍສະເພາະຈຸດສຸມບ້ານໃຫຍ່ນາຈະເລີນໃຫ້ສາມາດປະກາດເປັນຕົວເມືອງນ້ອຍໃນທ້າຍປີ 2024.

ຫຼັງຈາກນັ້ນ, ທ່ານ ອານຸພາບ ຕຸນາລົມ ກໍໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສພຊ ຊຸດທີ IX ເຊິ່ງໄດ້ຍົກໃຫ້ເຫັນບັນດາວຽກງານຕ່າງໆທີ່ກອງປະຊຸມໄດ້ພິຈາລະນາເຊັ່ນ: ຂົງເຂດວຽກງານຂອງລັດຖະບານ ເປັນຕົ້ນ: ບົດລາຍງານໂດຍສັງເຂບຂອງທ່ານນາຍົກລັດຖະມົນຕີ ກ່ຽວກັບສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ໄລຍະ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2024, ບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2024, ບົດລາຍງານການຈັດຕັ້ງປະຕິບັດໂຄງການລົງທຶນແຮ່ທາດໃນໄລຍະຜ່ານມາ ແລະ ແຜນການຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າຕິດພັນກັບການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງວິໄສທັດຮອດປີ 2040 ແລະ ຍຸດທະສາດພັດທະນາ ຮອດປີ 2030, ພິຈາລະນາຂົງເຂດວຽກງານການກວດສອບ, ວຽກງານສະພາແຫ່ງຊາດ, ການສ້າງ ແລະ ປັບປຸງກົດໝາຍ ແລະ ວຽກງານການປັບປຸງບຸກຄະລາກອນ. ນອກຈາກນີ້, ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ (ສສນວ) ກໍໄດ້ຜັດປ່ຽນກັນເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສປນວ ຊຸດທີ II.

ການລົງພົບປະແລະເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງນີ້, ຍັງໄດ້ຮັບຟັງຄຳສະເໜີກ່ຽວກັບບັນຫາຕ່າງໆທີ່ຢາກໃຫ້ ສສຊ ແລະ ສສນວ ຊ່ວຍພິຈາລະນາ ແລະ ແກ້ໄຂ ເຊິ່ງບັນຫາທີ່ທາງເມືອງສັງທອງ ໄດ້ສະເໜີມີຄື: ການຂຸດຄົ້ນແຮ່ຊາຍສາຍນ້ຳສັງທີ່ເປັນການອະນຸຍາດຂອງແຂວງວຽງຈັນ ເຮັດໃຫ້ນ້ຳຂຸ່ນ ສິ່ງຜົນກະທົບຕໍ່ສິ່ງແວດລ້ອມແລະການດຳລົງຊີວິດຂອງປະຊາຊົນທີ່ອາໄສຢູ່ຕອນລຸ່ມຂອງສາຍນ້ຳສັງ; ນອກນີ້ ຍັງໄດ້ສະເໜີຂໍຍົກເວັ້ນພາສີການປູກເຂົ້າ, ການຄວບຕຳແໜ່ງນາຍບ້ານ ແລະ ເລຂາພັກບ້ານ ເຮັດໃຫ້ເພີ່ມວຽກຫຼາຍແຕ່ເງິນອຸດໜູນພັດໜ້ອຍ, ສະເໜີໃຫ້ຄົ້ນຄວ້າພິຈາລະນາການຂຸດຄົ້ນບໍ່ແຮ່, ຫີນຊາຍ ແລະ ການບັນທຸກຂົນສົ່ງໃນລະດູຝົນ ສິ່ງຜົນກະທົບໃຫ້ເສັ້ນທາງເປ່ເພ ເຊິ່ງສະເໜີໃຫ້ມີການກວດກາແກ້ໄຂ.



# ແຂວງບໍລິຄຳໄຊ ປະເມີນຜົນການຈັດຕັ້ງປະຕິບັດ ລັດຖະທຳມະນູນ ສະບັບປັບປຸງປີ 2015



(ສພຊ) - ວັນທີ 29 ກໍລະກົດ 2024 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງບໍລິຄຳໄຊ ໄດ້ຈັດກອງປະຊຸມປະເມີນຜົນການປະຕິບັດລັດຖະທຳມະນູນ ສະບັບປັບປຸງປີ 2015 ໂດຍການເປັນປະທານຂອງທ່ານ ຄຳໄຫຼ ສີປະເສີດ ກຳມະການສູນກາງພັກ, ຮອງປະທານສູນກາງແນວລາວສ້າງຊາດ; ມີເຈົ້າແຂວງ, ປະທານສະພາປະຊາຊົນແຂວງ, ຮອງປະທານສະພາປະຊາຊົນແຂວງ, ບັນດາທ່ານສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ, ການນຳຂອງແຂວງ, ອົງການ, ຂະແໜງການ ແລະ ບັນດາທ່ານເຈົ້າເມືອງ ພ້ອມດ້ວຍອະດີດການນຳ ແລະ ແຂກຖືກເຊີນ ເຂົ້າຮ່ວມຢ່າງຫຼວງຫຼາຍ.

ທັງນີ້, ກໍເພື່ອສະຫຼຸບຕີລາຄາການປະຕິບັດລັດຖະທຳມະນູນໃນໄລຍະ 9 ປີຜ່ານມາໃນຂອບເຂດທົ່ວປະເທດ ກໍຄືແຂວງບໍລິຄຳໄຊ ໃຫ້ເຫັນໄດ້ຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ຜົນສຳເລັດ, ບັນຫາຄົງຄ້າງ ພ້ອມທັງສາເຫດ, ບົດບັນຍັດທີ່ສອດຄ່ອງ ຫຼື ບໍ່ສອດຄ່ອງ, ບົດຮຽນ ແລະ ບັນຫາທີ່ຕັ້ງຂຶ້ນ ທັງເປັນການເກັບກຳສັງລວມຄວາມເຫັນ, ຂໍ້ສະເໜີຕ່າງໆ ໃນການປະຕິບັດ, ເປັນຂໍ້ມູນໃຫ້ແກ່ການຄົ້ນຄວ້າ, ປັບປຸງເນື້ອໃນຂອງລັດຖະທຳມະນູນໃຫ້ຖືກຕ້ອງ, ຄົບຖ້ວນ, ສອດຄ່ອງ, ຣັດກຸມ ແລະ ສາມາດຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງໄດ້.

ໃນກອງປະຊຸມ, ໄດ້ຮັບຟັງການສະເໜີບົດປະເມີນການປະຕິບັດລັດຖະທຳມະນູນ ສະບັບປີ 2015 ຈາກທ່ານ ເລື່ອນວິໄລ ຈັນທະລາພັນ ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ ເຊິ່ງທ່ານໃຫ້ຮູ້ວ່າ: ການປັບປຸງລັດຖະທຳມະນູນຄັ້ງນີ້ ຈະສຸມໃສ່ຄົ້ນຄວ້າ, ປັບປຸງເນື້ອໃນໃຫຍ່ທີ່ສຳຄັນຈຳນວນໜຶ່ງ ຫາກບໍ່ແມ່ນປັບປຸງໝົດສະບັບ ເຊັ່ນ: ການກຳນົດບົດບາດນຳພາຂອງພັກ; ຈຸດໝາຍສັງຄົມນິຍົມ; ການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ; ການກຳນົດທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ຂອງບັນດາອົງການອຳນາດແຫ່ງລັດຂັ້ນສູນກາງ; ການກຳນົດການແບ່ງຂັ້ນການປົກຄອງທ້ອງຖິ່ນ ເປັນຕົ້ນຂັ້ນຕາແສງ ລວມທັງການກຳນົດທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່, ສາຍພົວພັນສາຍຕັ້ງ ແລະ ສາຍຂວາງ ຂອງອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ; ການແບ່ງຂັ້ນຄຸ້ມຄອງລະຫວ່າງສູນກາງກັບ ແຂວງ-ນະຄອນຫຼວງ, ລະຫວ່າງແຂວງ-ນະຄອນຫຼວງ ກັບຂັ້ນເມືອງ-ນະຄອນ, ຂັ້ນຕາແສງ ແລະ ຂັ້ນບ້ານ. ນອກຈາກເນື້ອໃນໃຫຍ່ດັ່ງກ່າວນີ້ ອາດຈະຄົ້ນຄວ້າ, ປັບປຸງບາງເນື້ອໃນຍ່ອຍທີ່ເຫັນວ່າມີຄວາມສຳຄັນ ແລະ ຈຳເປັນ.

ຈາກນັ້ນ, ໄດ້ມີການປະກອບຄຳເຫັນ ລວມທັງຂໍ້ສະເໜີຕ່າງໆຈາກຕາງໜ້າຂົງເຂດການເມືອງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ສະຫະພັນນັກຮົບເກົ່າ; ຂົງເຂດສະພາປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ; ຂົງເຂດ ປກຊ-ປກສ; ຂົງເຂດເສດຖະກິດ, ທຸລະກິດ, ຂົງເຂດວັດທະນະທຳ-ສັງຄົມ; ອົງການປົກຄອງເມືອງພາຍໃນແຂວງບໍລິຄຳໄຊ.

**(ຂ່າວ: ໂສລະຢ່າ; ພາບ: ມາລາວັນ)**

# ສພຂ ຫຼວງນ້ຳທາ ຕິດຕາມກວດກາ ຢູ່ເຂດເສດຖະກິດພິເສດບໍ່ເຕັນແດນງາມ



(ສພຊ) - ປະຕິບັດຕາມກົດໝາຍສະພາປະຊາຊົນຂັ້ນແຂວງ ໃນການຕິດຕາມກວດກາ ໃນຕອນເຊົ້າວັນທີ 2 ສິງຫາ 2024 ສະພາປະຊາຊົນແຂວງຫຼວງນ້ຳທາ ໄດ້ເຄື່ອນໄຫວຕິດຕາມກວດກາຕາມມະຕິກອງປະຊຸມສະພາປະຊາຊົນແຂວງ(ສພຂ) ວ່າດ້ວຍການຮັບຮອງເອົາແຜນພັດທະນາເສດຖະກິດພິເສດບໍ່ເຕັນແດນງາມ ແລະ ໄດ້ເປີດກອງປະຊຸມທີ່ຫ້ອງປະຊຸມເຂດເສດຖະກິດບໍ່ເຕັນແດນງາມ ພາຍໃຕ້ການເປັນປະທານຂອງທ່ານ ຄຳຟອງ ອິນມານີ ປະທານ ສພຂ ຫຼວງນ້ຳທາ; ເຂົ້າຮ່ວມມີສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າພະແນກການກ່ຽວຂ້ອງຂອງແຂວງ ແລະ ກຸ່ມບໍລິສັດ ພັດທະນາເຂດເສດຖະກິດພິເສດບໍ່ເຕັນແດນງາມລາວ ຈຳກັດ ພ້ອມດ້ວຍພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ 30 ກວ່າຄົນ.

ໃນກອງປະຊຸມໄດ້ຮັບຟັງຜູ້ຕາງໜ້າກຸ່ມບໍລິສັດ ພັດທະນາເຂດເສດຖະກິດພິເສດບໍ່ເຕັນແດນງາມລາວ ຈຳກັດ ລາຍງານສະພາບລວມເຂດເສດຖະກິດພິເສດບໍ່ເຕັນແດນງາມ ແມ່ນໄດ້ຮັບການລົງທຶນຈາກກຸ່ມບໍລິສັດຫຸ້ນສ່ວນ ຫາຍເຊິນ ແຂວງຢູນນານ ຈຳກັດ ໂຄງການນີ້ຕັ້ງຢູ່ແຂວງຫຼວງນ້ຳທາ ໃກ້ກັບດ່ານບໍ່ຫານ ແຂວງຢູນນານ ສປ ຈີນ, ເປັນພາກສ່ວນໜຶ່ງຂອງເຂດຮ່ວມມືເສດຖະກິດບໍ່ເຕັນ ສປປ ລາວ-ບໍ່ຫານ ສປ ຈີນ ມີເນື້ອທີ່ສຳປະທານ 1,640 ເຮັກຕາ, ປັດຈຸບັນສຳເລັດ 11 ກິດຈະກຳ ພວມສືບຕໍ່ກໍ່ສ້າງຕຶກອາຄານ ແລະ ພື້ນຖານໂຄງລ່າງຕ່າງໆແມ່ນສຳເລັດໂດຍພື້ນຖານ; ນອກນັ້ນ, ໄດ້ຮັບຟັງຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ການຈັດຕັ້ງປະຕິບັດທາງດ້ານເສດຖະກິດ, ຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ອື່ນໆ ໃນການຈັດຕັ້ງປະຕິບັດໂຄງການໃນໄລຍະຜ່ານມາເຖິງປັດຈຸບັນ ແລະ ຍັງໄດ້ສະເໜີບັນຫາທີ່ພົບຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດວຽກງານ ເພື່ອໃຫ້ ສພຂ ນຳສະເໜີຫາພາກສ່ວນທີ່ກ່ຽວຂ້ອງແກ້ໄຂ.

ວາລະດຽວກັນ, ຜູ້ແທນເຂົ້າຮ່ວມກອງປະຊຸມຍັງໄດ້ແລກປ່ຽນປະກອບຄຳຄິດເຫັນຕໍ່ກັບການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ, ຊອກຫາວິທີແກ້ໄຂ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານຂອງບໍລິສັດ ພັດທະນາເຂດເສດຖະກິດພິເສດບໍ່ເຕັນແດນງາມລາວ ຈຳກັດ ໄດ້ຈັດຕັ້ງປະຕິບັດວຽກງານມີຄວາມສະດວກ, ສຳເລັດຕາມລະດັບຄາດໝາຍ.

ໃນຕອນທ້າຍ, ທ່ານຄຳຟອງ ອິນມານີ ໄດ້ມີຄຳເຫັນຕໍ່ກອງປະຊຸມເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ກັບການຈັດຕັ້ງປະຕິບັດວຽກງານຂອງບໍລິສັດ ພັດທະນາເຂດເສດຖະກິດພິເສດບໍ່ເຕັນແດນງາມລາວ ຈຳກັດ ພ້ອມທັງຮຽກຮ້ອງໃຫ້ເອົາໃຈໃສ່ຕື່ມຕໍ່ການແກ້ໄຂຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມ ເພື່ອບໍ່ໃຫ້ມີຜົນກະທົບໃນຕໍ່ໜ້າ ແລະ ໃນການລົງຕິດຕາມກວດກາ, ຊຸກຍູ້ຄັ້ງນີ້ ຍັງຈະນຳເອົາຂໍ້ສະເໜີຕ່າງໆໄປສັງລວມລາຍງານໃນກອງປະຊຸມສະພາແຫ່ງຊາດແລະບັນດາກະຊວງທີ່ກ່ຽວຂ້ອງ, ບັນຫາໃດທີ່ຕິດພັນກັບພະແນກການຂອງແຂວງ ແມ່ນໃຫ້ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ສພຂ ຮີບຮ້ອນປະສານສົມທົບພາກສ່ວນທີ່ກ່ຽວຂ້ອງແກ້ໄຂ ແລ້ວລາຍງານໃຫ້ຄະນະປະຈຳ ສພຂ ທັງນີ້ກໍເພື່ອເຮັດໃຫ້ບໍລິສັດດັ່ງກ່າວ ໄດ້ຮັບການພັດທະນາສຳເລັດຕາມລະດັບຄາດໝາຍທີ່ວາງໄວ້.

ໂອກາດດັ່ງກ່າວ, ປະທານ ສພຂ ພ້ອມດ້ວຍຄະນະ ຍັງໄດ້ລົງກວດກາພື້ນທີ່ຕົວຈິງ 23 ແຜນຜັງ ຕາມມະຕິກອງປະຊຸມ ສພຂ ຮັບຮອງ ແລະ 11 ກິດຈະກຳທີ່ໄດ້ຈັດຕັ້ງປະຕິບັດສຳເລັດໂດຍພື້ນຖານ.

# ຄະນະພັກຮາກຖານ ສພຂ ບໍລິຄຳໄຊ ຕີລາຄາວຽກງານຮອບດ້ານກາງສະໄໝ




(ສພຊ) - ກອງປະຊຸມສະຫຼຸບຕີລາຄາຄືນຜົນການນຳພາ-ຊີ້ນຳວຽກງານຮອບດ້ານກາງສະໄໝ (2 ປີເຄິ່ງ) 2021-2023 ຂອງຄະນະພັກຮາກຖານສະພາປະຊາຊົນແຂວງ (ສພຂ) ບໍລິຄຳໄຊ ໄດ້ຈັດຂຶ້ນໃນລະຫວ່າງວັນທີ 7-9 ສິງຫາ 2024 ຢູ່ຫ້ອງປະຊຸມ ສພຂ ໂດຍການເຜີຍແຜ່ເອກະສານຂອງສະຫາຍ ປອ. ສຸວັນນີ ໄຊຊະນະ, ຮອງເລຂາຄະນະບໍລິຫານງານພັກແຂວງ ປະທານ ສພຂ ບໍລິຄຳໄຊ; ມີສະຫາຍ ໃສຄຳ ທອງລັດ ກຳມະການພັກແຂວງ, ເລຂາຄະນະພັກຮາກຖານ ສພຂ ບໍລິຄຳໄຊ, ມີຄະນະຊຸກຍູ້ກອງປະຊຸມຂັ້ນແຂວງ, ຄະນະພັກຮາກຖານ, ເລຂາໜ່ວຍພັກ, ສະມາຊິກພັກທີ່ຂຶ້ນກັບຄະນະພັກເຂົ້າຮ່ວມ.

ສະຫາຍ ປອ. ສຸວັນນີ ໄຊຊະນະ ໄດ້ຍົກໃຫ້ເຫັນບັນດາເນື້ອໃນ 4 ເອກະສານ ເປັນຕົ້ນແມ່ນຄວາມສຳຄັນ, ເຫດຜົນ ແລະ ຈຸດປະສົງຂອງການດຳເນີນກອງປະຊຸມກາງສະໄໝແຕ່ລະຂັ້ນ ເຊິ່ງກໍແມ່ນເພື່ອເຮັດໃຫ້ສະມາຊິກພັກຮັບຮູ້ເຂົ້າໃຈຕໍ່ບັນດາເນື້ອໃນເອກະສານດັ່ງກ່າວຢ່າງເລິກເຊິ່ງ ເປັນບ່ອນອີງເຂົ້າໃນການທາບທາມຄວາມໄວ້ວາງໃຈ ຄະນະພັກຮາກຖານ, ຄະນະໜ່ວຍພັກ, ສະມາຊິກພັກ ແລະ ເຂົ້າໃນການຂຽນໃບສຳຫຼວດ, ການໃຫ້ຄະແນນຈັດແບ່ງປະເພດຕົນເອງ ແລະ ສະມາຊິກພັກດ້ວຍກັນ, ກອງປະຊຸມກາງສະໄໝຄັ້ງນີ້ ຈະໄດ້ແບ່ງໜ່ວຍສຳຫຼວດກວດກາຜົນງານການນຳພາ-ຊີ້ນຳຄະນະເລຂາໜ່ວຍພັກ ແລະ ທາບທາມບຸກຄະລິກຄະພາບຕາມ 4 ດ້ານສຳລັບຜູ້ທີ່ມີຕຳແໜ່ງປະເພດ 6 ຂຶ້ນໄປ ເພື່ອຕີລາຄາທົບທວນຄືນການນຳພາຈັດຕັ້ງປະຕິບັດບັນດາທິດທາງ, ເນື້ອໃນ, ຄາດໝາຍ ທີ່ກອງປະຊຸມໃຫຍ່ຂັ້ນຂອງຕົນວາງອອກ ອັນໃດໄດ້ເຮັດມີຜົນສຳເລັດແລະອັນໃດຍັງຄົງຄ້າງ ເພື່ອສືບຕໍ່ນຳພາປະຕິບັດໃຫ້ບັນລຸຜົນຕາມໄດ້ກຳນົດໄວ້, ເພື່ອກວດກາຄວາມຮັບຜິດຊອບໜ້າທີ່ການເມືອງຂອງບັນດາສະຫາຍເລຂາໜ່ວຍພັກຕໍ່ກັບການນຳພາລວມ ແລະ ຄວາມຮັບຜິດຊອບຂອງບຸກຄົນໃນຄະນະພັກ ຕາມການແບ່ງງານ, ແບ່ງຄວາມຮັບຜິດຊອບ; ຊອກໃຫ້ເຫັນດ້ານຕັ້ງໜ້າທີ່ຈະເສີມຂະຫຍາຍ, ດ້ານອ່ອນຄົງຄ້າງທີ່ຈະໄດ້ແກ້ໄຂ, ປະຕິບັດຫຼັກການ ຕຳນິຕົນເອງ ແລະ ຕິຊົມເຊິ່ງກັນ ແລະ ກັນ ພາຍໃນພັກ, ເພີ່ມທະວີຄວາມສາມັກຄີເປັນເອກະພາບພາຍໃນຄະນະພັກ, ຍົກສູງນ້ຳໃຈຮັບຜິດຊອບ ເປັນແບບຢ່າງນຳໜ້າຂອງຄະນະພັກ ເພື່ອເປັນໃຈກາງ-ຫຼັກແຫຼ່ງ ໃຫ້ແກ່ການປັບປຸງກໍ່ສ້າງພັກ ໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນ.

**(ໂສລະຢ່າ)**

# ຄະນະຜູ້ແທນແຂວງດຽນບຽນ ພົບປະແລກປ່ຽນບົດຮຽນກັບ ສພຂ 3 ແຂວງພາກເໜືອ



(ສພຊ) - ຄະນະຜູ້ແທນ ສພຂ ດຽນບຽນ ແຫ່ງ ສສ. ຫວຽດນາມ ນຳໂດຍສະຫາຍ ລໍ່ວັນເຟືອງ ກຳມະການປະຈຳພັກແຂວງ, ປະທານ ສພຂ ດຽນບຽນ ໄດ້ເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ຢ່າງເປັນທາງການ ໃນລະຫວ່າງວັນທີ 6-10 ສິງຫາ 2024 ໂດຍໄດ້ພົບປະແລະເຮັດວຽກຮ່ວມກັບ ສພຂ 3 ແຂວງຂອງ ສປປ ລາວ ຄື: ຜົ້ງສາລີ, ອຸດົມໄຊ ແລະ ຫຼວງພະບາງ ເພື່ອເປັນການຮັດແໜ້ນ ແລະ ເສີມຂະຫຍາຍມູນເຊື້ອອັນດີງາມແຫ່ງສາຍພົວພັນມິດຕະພາບ, ຄວາມສາມັກຄີແບບພິເສດ; ການຮ່ວມມືຮອບດ້ານລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ຫວຽດນາມ, ຫວຽດນາມ-ລາວ ເວົ້າລວມເວົ້າສະເພາະລະຫວ່າງ ສພຂ ແຫ່ງ ສປປ ລາວ ແລະ ສພຂ ດຽນບຽນ ແຫ່ງ ສສ. ຫວຽດນາມທັງເປັນການສືບຕໍ່ການພົວພັນຮ່ວມມືແລກປ່ຽນບົດຮຽນເຊິ່ງກັນແລະກັນໃນຂົງເຂດນິຕິບັນຍັດຂັ້ນທ້ອງຖິ່ນ; ພົບປະແລກປ່ຽນບົດຮຽນເຊິ່ງກັນແລະກັນກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ສພຂ ຂອງແຕ່ລະຝ່າຍ.

ທີ່ແຂວງຜົ້ງສາລີ ໄດ້ຈັດກອງປະຊຸມພົບປະແລກປ່ຽນບົດຮຽນ ຮ່ວມກັບສະຫາຍ ທອງສີ ເສົາສຸລິພົມ ຮອງເລຂາພັກແຂວງ, ປະທານ ສພຂ ຜົ້ງສາລີ ພ້ອມດ້ວຍຄະນະ ເຊິ່ງສະຫາຍ ທອງສີ ເສົາສຸລິພົມ ໄດ້ສະເໜີໃຫ້ຄະນະຜູ້ແທນ ສພຂ ດຽນບຽນ ຮັບຊາບກ່ຽວກັບສະພາບຈຸດພິເສດ ແລະຄວາມຫຍຸ້ງຍາກຂອງແຂວງຜົ້ງສາລີ ຖ້າທຽບໃສ່ບັນດາແຂວງໃກ້ຄຽງພາຍໃນປະເທດ ໂດຍສະເພາະບັນຫາພື້ນຖານໂຄງລ່າງຈຳນວນໜຶ່ງ ຍັງບໍ່ທັນໄດ້ຮັບການພັດທະນາເທົ່າທີ່ຄວນ; ການຈັດສັນອາຊີບຄົງທີ່ໃຫ້ປະຊາຊົນ ແລະການແກ້ໄຂຄວາມທຸກຍາກຂອງປະຊາຊົນຍັງບໍ່ທັນບັນລຸຕາມແຜນການ, ແຕ່ພາຍໃຕ້ການນຳພາ-ຊີ້ນຳຂອງຄະນະພັກ-ອົງການປົກຄອງທຸກຂັ້ນ ເຮັດໃຫ້ສະພາບພາຍໃນແຂວງມີຄວາມສະຫງົບໂດຍພື້ນຖານ, ເສດຖະກິດພາຍໃນແຂວງມີການຂະຫຍາຍຕົວຢ່າງຕໍ່ເນື່ອງ. ມາຮອດປັດຈຸບັນນີ້ ມູນຄ່າ GDP 2,522.85 ຕື້ກີບ, ສະເລ່ຍໃສ່ຄົນໜຶ່ງໄດ້ 567 ໂດລາສະຫະລັດຕໍ່ຄົນ/ປີ, ໂຄງປະກອບເສດຖະກິດຕາມຂະແໜງການໄດ້ມີການຫັນປ່ຽນໄປຕາມທິດ ທີ່ພັກເຮົາໄດ້ກຳນົດໄວ້ເຊັ່ນ: ດ້ານກະສິກຳ-ປ່າໄມ້ ກວມ 51.64%, ອຸດສາຫະກຳ-ຫັດຖະກຳ ກວມ 16.18%, ການບໍລິການກວມ 28.65%. ແຂວງຜົ້ງສາລີມີ: ບ້ານທຸກຍາກຍັງກວມ 69,82%, ຄອບຄົວທຸກຍາກກວມ57,03%, ບ້ານຊົມໃຊ້ຕາຄ່າຍໄຟຟ້າກວມ 71.77%, ບ້ານຊົມໃຊ້ນ້ຳລິນ-ນ້ຳສະອາດກວມ 85.49%, ບ້ານມີເສັ້ນທາງທຽວໄດ້ 2 ລະດູການ ກວມ 67.40% ຂອງຈຳນວນບ້ານທີ່ມີເສັ້ນທາງເຂົ້າເຖິງ, ບ້ານທີ່ມີສັນຍານໂທລະສັບກວມ 95,63% ຂອງຈຳນວນບ້ານໃນທົ່ວແຂວງ.

ພ້ອມນັ້ນ, ທັງສອງຝ່າຍກໍໄດ້ຜັດປ່ຽນກັນຂຶ້ນສະເໜີບັນດາເນື້ອໃນ ແລະ ບົດຮຽນ, ປະສົບການ ແລະ ການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຕາມຂອບເຂດສິດ ແລະ ໜ້າທີ່ທີ່ກົດໝາຍກຳນົດໄວ້ ພ້ອມທັງປະກອບຄຳຄິດ, ຄຳເຫັນ ຕໍ່ວຽກງານຕ່າງໆ ຢ່າງກົງໄປກົງມາ, ສ້າງສັນແລະເປັນເອກະພາບ ບົນພື້ນຖານຄວາມສາມັກຄີຮັກແພງ, ຊ່ວຍເຫຼືອເຊິ່ງກັນ ແລະກັນ ເປັນຕົ້ນແມ່ນວຽກງານການຄົ້ນຄວ້າ, ພິຈາລະນາຮັບຮອງເອົາດ້ານນິຕິກຳ, ການຕົກລົງບັນຫາທີ່ສຳຄັນຂອງທ້ອງຖິ່ນ ແລະ ການຕິດຕາມກວດກາຕາມພາລະບົດບາດ, ສິດ ແລະ ໜ້າທີ່ທີ່ກຳນົດໄວ້ໃນກົດໝາຍ ຄືບັນຫາການລົງທຶນຂອງພາກລັດ, ເອກະຊົນ ແລະ ແກ້ໄຂບັນດາຄຳສະເໜີຂອງພົນລະເມືອງ ແລະ ວຽກງານໂຄງປະກອບບຸຄະລາກອນຂອງ ສພຂ ແນໃສ່ເຮັດໃຫ້ການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານ ໄດ້ຮັບຜົນສຳເລັດແລະມີປະສິດທິພາບສູງຂຶ້ນກວ່າເກົ່າ.

ໂອກາດດັ່ງກ່າວ, ປະທານ ສພຂ ຜົ້ງສາລີ ຍັງໄດ້ສະເໜີໃຫ້ຄະນະຜູ້ແທນທັງສອງຝ່າຍສືບຕໍ່ພົບປະແລກປ່ຽນບົດຮຽນສອງປີຕໍ່ຄັ້ງ ໂດຍຜັດປ່ຽນກັນເປັນເຈົ້າພາບ; ຊີ້ນຳບັນດາຄະນະກຳມະການແລະຄະນະເລຂາທິການ (ຫ້ອງວ່າການ) ສພຂ ສອງແຂວງໃຫ້ມີການພົບປະແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ ເຫັນວ່າມີຄວາມຈຳເປັນ; ສືບຕໍ່ເພີ່ມພູນຄູນສ້າງຄວາມສາມັກຄີມິດຕະພາບແບບພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງລາວ-ຫວຽດນາມ ເວົ້າລວມ, ເວົ້າສະເພາະ ແຂວງຜົ້ງສາລີ ແຫ່ງ ສປປ ລາວ ກັບແຂວງດຽນບຽນ ແຫ່ງ ສສ.ຫວຽດນາມ ໃຫ້ນັບມື້ໄດ້ຮັບການພັດທະນາດີຂຶ້ນກວ່າເກົ່າ.

ນອກຈາກນັ້ນ, ຄະນະຜູ້ແທນຈາກ ສພຂ ດຽນບຽນ ຍັງໄດ້ເຂົ້າພົບສະຫາຍຄຳຜອຍວັນນະສານກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງຜົ້ງສາລີ ເພື່ອສະເໜີຈຸດປະສົງ ແລະ ລາຍງານຜົນສຳເລັດຂອງການເຄື່ອນໄຫວພົບປະແລະເຮັດວຽກງານຂອງຄະນະຜູ້ແທນ ສພຂ ດຽນບຽນແຫ່ງ ສສ. ຫວຽດນາມຄັ້ງນີ້ພ້ອມທັງໄດ້ຮັບຟັງຄຳເຫັນຈາກສະຫາຍເລຂາພັກແຂວງ, ເຈົ້າແຂວງຜົ້ງສາລີ ເຊິ່ງສະຫາຍໄດ້ຕີລາຄາສູງ ແລະ ສະເໜີບາງບັນຫາໃນການພົວພັນຮ່ວມມືໃນຕໍ່ໜ້າ ຄື: ສືບຕໍ່ພົວພັນຮ່ວມມືຮອບດ້ານຂັ້ນແຂວງ, ຂັ້ນພະແນກການ, ອົງການ, ຂັ້ນເມືອງ ແລະ ຂັ້ນຕາແສງ ບົນພື້ນຖານແນວທາງນະໂຍບາຍຂອງສອງພັກ, ສອງລັດຖະບານແລະຕາມເນື້ອໃນບົດບັນທຶກຊ່ວຍຈຳຂອງຄະນະຜູ້ແທນຂັ້ນສູງຂອງສອງແຂວງ ຜົ້ງສາລີ-ດຽນບຽນ ທີ່ໄດ້ລົງນາມເຊັ່ນກັນ ໃຫ້ກາຍເປັນອັນລະອຽດແລະປາກົດຜົນເປັນຈິງ; ສອງຝ່າຍສືບຕໍ່ສະໜັບສະໜູນ, ຊຸກຍູ້ສົ່ງເສີມແລະສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ແກ່ບັນດາຫົວໜ່ວຍທຸລະກິດຮ່ວມມື ດຳເນີນທຸລະກິດ, ການຄ້າ, ການລົງທຶນແລະການທ່ອງທ່ຽວຕາມທ່າແຮງ ແລະ ຄວາມສາມາດຂອງແຕ່ລະແຂວງ ເປັນຕົ້ນແມ່ນການປູກໝາກກາເຟ, ເພາະແຂວງດຽນບຽນມີທ່າແຮງ ແລະ ສອງຝ່າຍກໍໄດ້ພ້ອມກັນສຳຫຼວດແລ້ວ; ສະເໜີຮ່ວມມືສ້າງຄວາມເຂັ້ມແຂງໃຫ້ສູນສະຖານີ ຢູ່ 3 ເມືອງໃຕ້ (ເມືອງໃໝ່, ເມືອງຂວາ ແລະ ເມືອງສຳພັນ) ໂດຍສຸມໃສ່ສູນກະສິກຳຫາດຖ້ຳ ໃຫ້ເປັນຕົວແບບກ່ອນ.

ຄະນະຜູ້ແທນໄດ້ເຄື່ອນໄຫວທັດສະນະທ່ຽວຊົມເຄື່ອງຫັດຖະກຳຊົນເຜົ່າອາຄາ ປີລາໂຈ; ສິນຄ້າໂອດອບຂອງເມືອງ ແລະ ຮັບຊົມການສະແດງວັນນະຄະດີຈາກໜ່ວຍວັນນະຄະດີຂອງບ້ານນ່ຳຍ່ອງໃໝ່ເມືອງບຸນເໜືອອີກດ້ວຍ.

ທີ່ແຂວງອຸດົມໄຊ ໄດ້ຮັບການຕ້ອນຮັບໂດຍສະຫາຍ ຄຳດີ ວົງລ້ອມ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງອຸດົມໄຊ ພ້ອມດ້ວຍຄະນະ ເຊິ່ງການເຄື່ອນໄຫວຄັ້ງນີ້ ຖືເປັນການປະຕິບັດຕາມແນວທາງການຕ່າງປະເທດ ຂອງສອງພັກ-ສອງລັດຖະບານ ກໍຄືແຜນການຮ່ວມມືລະຫວ່າງແຂວງອຸດົມໄຊ ແຫ່ງ ສປປລາວ ກັບແຂວງດຽນບຽນ ແຫ່ງສສ. ຫວຽດນາມເວົ້າລວມ ເວົ້າສະເພາະສອງ ສພຂ ອຸດົມໄຊ-ດຽນບຽນ ທີ່ເຄີຍພົບປະອັນເປັນມູນເຊື້ອທີ່ດີງາມຜ່ານມາ ໂດຍທັງສອງຝ່າຍໄດ້ຈັດພິທີພົບປະແລກປ່ຽນບົດຮຽນໃນການເຄື່ອນໄຫວວຽກງານລະຫວ່າງສອງ ສພຂ ອຸດົມໄຊ-ດຽນບຽນ ໃນທ້າຍປີ2023ທີ່ແຂວງດຽນບຽນ ແລະ ການພົບປະທີ່ແຂວງອຸດົມໄຊຄັ້ງນີ້ທັງສອງຝ່າຍກໍໄດ້ແລກປ່ຽນບົດຮຽນຮ່ວມກັນໃນຫຼາຍໆຫົວຂໍ້ທີ່ຕ່າງຝ່າຍຕ່າງໃຫ້ຄວາມສົນໃຈ ເປັນຕົ້ນແມ່ນໃນຂົງເຂດການປະຕິບັດໜ້າທີ່ວຽກງານຕາມ 3 ພາລະບົດບາດຂອງ ສພຂ.

ທີ່ແຂວງຫຼວງພະບາງໄດ້ຮັບການຕ້ອນຮັບໂດຍສະຫາຍ ວົງສະຫວັນ ເທບພະຈັນ ຮອງເລຂາພັກແຂວງ, ປະທານ ສພຂ ຫຼວງພະບາງ ພ້ອມດ້ວຍຄະນະ ເຊິ່ງໃນການພົບປະ ຄະນະຜູ້ແທນທັງສອງຝ່າຍ ໄດ້ຜັດປ່ຽນກັນລາຍງານສະພາບການພັດທະນາເສດຖະກິດ-ສັງຄົມຂອງແຂວງຕິດພັນກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງ ສພຂ ໃຫ້ກັນຮັບຊາບ ເປັນຕົ້ນແມ່ນການຮັບຮອງເອົາມະຕິຕ່າງໆຕາມການສະເໜີຂອງອົງການປົກຄອງແຂວງ ການຕົກລົງຮັບຮອງເອົາບັນຫາສຳຄັນຕ່າງໆຂອງແຂວງ ເຊັ່ນ: ແຜນງົບປະມານລາຍຮັບ-ລາຍຈ່າຍ, ການລົງທຶນ, ການຕິດຕາມກວດກາບົດລາຍງານ ການປັບປຸງກົງຈັກການຈັດຕັ້ງ ແລະ ບຸຄະລາກອນຂອງອົງການປົກຄອງແຂວງ, ການສ້າງຄວາມເຂັ້ມແຂງໃຫ້ສະມາຊິກສະພາ ແລະພະນັກງານສະພາປະຊາຊົນແຂວງ, ການແກ້ໄຂຄຳຮ້ອງທຸກຂອງປະຊາຊົນ, ການທາບທາມຮ່າງກົດໝາຍ ແລະ ວຽກງານອື່ນໆ.

ພາຍຫຼັງສຳເລັດການພົບປະແລກປ່ຽນບົດຮຽນ ຄະນະນຳ ສພຂ ຫຼວງພະບາງ ໄດ້ນຳພາຄະນະຜູ້ແທນ ສພຂ ດຽນບຽນ ໄປທ່ຽວຊົມສະຖານທີ່ທ່ອງທ່ຽວທີ່ເປັນເອກະລັກຂອງແຂວງຫຼວງພະບາງ ເຊັ່ນ: ຕະຫຼາດກາງຄືນ, ຮ້ານຫັດຖະກຳເຈ້ຍປໍສາບ້ານຊ່າງຄ້ອງ, ວັດຊຽງທອງ, ນ້ຳຕົກຕາດກວາງຊີ, ຫໍພິພິທະພັນແຫ່ງຊາດຫຼວງພະບາງຕື່ມອີກ.

**(ສຸຫວັນ ແສງຈັນສຸກ, ນັກຂ່າວ ສພຂ ອຸດົມໄຊ ແລະ ນາງ ຄຳຫຼ້າ ພອນພິລາ)**

## ກົນໄກປະສານງານ ແລະ ການພົວພັນວຽກງານ ລະຫວ່າງ ສພຂ ກັບ ອົງການປົກຄອງແຂວງວຽງຈັນ

(ສພຊ) - ໃນລະຫວ່າງວັນທີ 13-14 ສິງຫາ 2024 ສະພາປະຊາຊົນແຂວງວຽງຈັນ (ສພຂ) ໄດ້ຈັດກອງປະຊຸມເຝິກອົບຮົມ ກ່ຽວກັບກົນໄກປະສານງານແລະການພົວພັນວຽກງານລະຫວ່າງ ສພຂ ກັບອົງການປົກຄອງແຂວງ ແລະ ອົງການປົກຄອງເມືອງ 11 ເມືອງ; ຢູ່ເມືອງວັງວຽງແຂວງວຽງຈັນໂດຍການເປັນປະທານຂອງທ່ານ ລຳໄມ ກູດລາວົງ ຄະນະປະຈຳພັກແຂວງ, ຮອງປະທານ ສພຂ ວຽງຈັນ; ມີປະທານ-ຮອງປະທານຄະນະກຳມະການ, ສະມາຊິກສະພາປະຊາຊົນແຂວງ (ສສຂ), ຫົວໜ້າພະແນກ-ຮອງຫົວໜ້າພະແນກ, ເຈົ້າເມືອງ-ຮອງເຈົ້າເມືອງ, ວິທະຍາກອນຈາກ ສພຂ ແລະຄະນະຮັບຜິດຊອບກອງປະຊຸມ ເຂົ້າຮ່ວມ.

ກອງປະຊຸມ ໄດ້ຮັບຟັງການຂຶ້ນສະເໜີບົດຮຽນກ່ຽວກັບ 5 ຫົວຂໍ້ຄື: ບົດຮຽນກ່ຽວກັບກົນໄກການປະສານງານ ແລະ ການພົວພັນ ລະຫວ່າງ ສພຂ ກັບອົງການປົກຄອງແຂວງ; ບົດຮຽນກົນໄກການປະສານງານລະຫວ່າງ ຄະນະເລຂາທິການ ສພຂ ກັບຫ້ອງວ່າການແຂວງ ເຊິ່ງເປັນວິທະຍາກອນ; ເຜີຍແຜ່ມະຕິຂອງຄະນະປະຈຳ ສພຂ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງຄະນະກຳມະການເສດຖະກິດ ແຜນການ ແລະການເງິນ; ເຜີຍແຜ່ມະຕິຂອງຄະນະປະຈຳ ສພຂ ວຽງຈັນ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງຄະນະເລຂາທິການ ສພຂວຽງຈັນ; ເຜີຍແຜ່ມະຕິວ່າດ້ວຍການຈັດຕັ້ງແລະການເຄື່ອນໄຫວ ວຽກງານຂອງ ສສຂ ປະຈຳເຂດເລືອກຕັ້ງເມືອງ; ພ້ອມນັ້ນ, ບັນດາຜູ້ເຂົ້າຮ່ວມເຝິກອົບຮົມ ໄດ້ຄົ້ນຄ້ວາ, ສົນທະນາແລກປ່ຽນຄຳຄິດຄຳເຫັນເຊິ່ງກັນແລະກັນຢ່າງເປັນຂະບວນການຟົດຟື້ນ.

ກອງປະຊຸມໄດ້ຮັບຟັງການໂອ້ລົມຂອງ ທ່ານ ລຳໄມ ກູດລາວົງ ວ່າ: ການເຝິກອົບຮົມໃນຄັ້ງນີ້ ສະແດງໃຫ້ເຫັນເຖິງຄວາມເປັນເອກະພາບ ແລະຄວາມຮັບຜິດຊອບສູງຂອງບັນດາທ່ານນັກສຳມະນາກອນທຸກໆທ່ານ ທີ່ມີຄວາມເອົາໃຈໃສ່ຄົ້ນຄ້ວາ, ຮັບຟັງການນຳສະເໜີບົດຮຽນຂອງວິທະຍາກອນໃນແຕ່ລະຫົວຂໍ້, ໃຫ້ການຮ່ວມມືໃນການສົນທະນາ, ປຶກສາຫາລືແລກປ່ຽນຄຳຄິດຄຳເຫັນເຊິ່ງກັນແລະກັນ; ພ້ອມທັງ ຮຽກຮ້ອງໃຫ້ບັນດານັກສຳມະນາກອນ ທີ່ເຂົ້າຮ່ວມກອງປະຊຸມຝຶກອົບຮົມ ຈົ່ງນຳເອົາບົດຮຽນທີ່ໄດ້ຮຽນຮູ້ໃນເທື່ອນີ້ ໄປໝູນໃຊ້ເຂົ້າໃນການປະຕິບັດວຽກງານຕົວຈິງ ຕາມພາລະບົດບາດຂອງຕົນຮັບຜິດຊອບ ໃຫ້ມີປະສິດທິພາບ ແລະປະສິດທິຜົນສູງຂຶ້ນກວ່າເກົ່າ.

ກອງປະຊຸມຝຶກອົບຮົມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດແລະສະພາປະຊາຊົນຂັ້ນແຂວງຫຼືສະເຕັບສ໌ (STEPs).

**(ນາງ ບຸລາຕີ ແສນທະວົງ)**

# ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສພຊ ແລະ ສພຂ



(ສພຊ) - ເພື່ອປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ໃນການເປັນຕົວແທນແຫ່ງສິດຜົນປະໂຫຍດອັນຊອບທຳຂອງປະຊາຊົນບັນດາເຜົ່າໃຫ້ສຳເລັດຕາມລະດັບຄາດໝາຍ ໃນລະຫວ່າງວັນທີ 14-20 ສິງຫາ2024; ສະພາປະຊາຊົນແຂວງ ນຳໂດຍທ່ານ ຈັນທະສຸລິນ ໝັ້ນປະດິດສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງປະທານຄະນະກຳມະການຍຸຕິທຳແລະປກຊ-ປກສ ພ້ອມດ້ວຍສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງຫຼວງນ້ຳທາ ໄດ້ລົງເຜີຍແຜ່ເນື້ອໃນຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ແລະ ສະໄໝສາມັນເທື່ອທີ 7 ຂອງສະພາປະຊາຊົນແຂວງຫຼວງນ້ຳທາ ຊຸດທີ II ຢູ່ເມືອງຫຼວງນ້ຳທາ ເຊິ່ງລວມທັງໝົດ 8 ບ້ານຄື ບ້ານທົ່ງໄຈ້ໃຕ້, ບ້ານປ່າປວົະ, ບ້ານຫຼັກຄຳເກົ່າ, ບ້ານຫາດຍາວ, ບ້ານນ້ຳລື, ບ້ານດອນມູນ, ບ້ານຫ້ວຍຫ້ອມ ແລະ ບ້ານນ້ຳແດງ, ໃຫ້ກຽດເຂົ້າຮ່ວມຮັບຟັງມີຄະນະພັກຮາກຖານກຸ່ມບ້ານ, ນາຍບ້ານ, ອົງການຈັດຕັ້ງຂັ້ນບ້ານ ຕະຫຼອດຮອດປະຊາຊົນເຂົ້າຮ່ວມຮັບຟັງທັງໝົດ 600 ກວ່າຄົນ.

ໄດ້ຮັບຟັງການເຜີຍແຜ່ເນື້ອໃນຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ7ຂອງສະພາແຫ່ງຊາດຊຸດທີ IX; ເຊິ່ງກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນຂອງປະເທດຊາດຄື: ພິຈາລະນາ, ຮັບຮອງບົດລາຍງານຂອງລັດຖະບານກ່ຽວການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາຕິດພັນການຈັດຕັ້ງປະຕິບັດ ສອງວາລະແຫ່ງຊາດ ໄລຍະ 6 ເດືອນຕົ້ນປີ 2024 ກອງປະຊຸມສະແດງຄວາມຊົມເຊີຍ ຕໍ່ຄວາມພະຍາຍາມຂອງລັດຖະບານໃນການແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນດ້ວຍການຜັນຂະຫຍາຍແນວທາງນະໂຍບາຍຂອງພັກທີ່ວາງອອກໃນແຕ່ລະໄລຍະ ; ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດບັນດາໂຄງການລົງທຶນແຮ່ທາດໃນໄລຍະຜ່ານມາ; ພິຈາລະນາຮັບຮອງເອົາບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດບັນດາຄາດໝາຍຂອງວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໃນໄລຍະຜ່ານມາ ແລະ ທິດທາງແຜນການໃນຕໍ່ໜ້າ ຄື: ການສ້າງຄອບຄົວພົ້ນທຸກ ແລະ ບ້ານພົ້ນທຸກ; ການສ້າງຄອບຄົວພັດທະນາ ແລະ ບ້ານພັດທະນາ; ການສ້າງບ້ານໃຫຍ່ກາຍເປັນຕົວເມືອງນ້ອຍໃນຊົນນະບົດ; ການຈັດສັນພູມລຳເນົາແລະບ່ອນຢູ່ອາໄສ, ການຈັດສັນທີ່ດິນທຳການຜະລິດແລະການຈັດສັນອາຊີບ; ກອງປະຊຸມໄດ້ພິຈາລະນາແລະຮັບຮອງເອົາບົດລາຍງານຂອງອົງການກວດສອບແຫ່ງລັດກ່ຽວກັບການແກ້ໄຂຜົນການກວດສອບປະຈຳປີ 2023; ພິຈາລະນາແລະຮັບຮອງເອົາບົດລາຍງານກ່ຽວກັການເຄື່ອນໄຫວວຽກງານແຕ່ກອງປະຊຸມສະໄໝສາມັນເທື່ອທີ 6 ຫາເທື່ອທີ 7 ແລະ ແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX; ຮັບຟັງການລາຍງານກ່ຽວກັບການກະກຽມປັບປຸງບາງເນື້ອໃນລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບປີ 2015 ໂດຍກົມການເມືອງສູນກາງພັກ ໄດ້ອອກມະຕິແຕ່ງຕັ້ງຄະນະກຳມະການລະດັບຊາດ ປັບປຸງລັດຖະທຳມະນູນປີ 2015, ນຳເຂົ້າພິຈາລະນາ ແລະ ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ9ຂອງສະພາແຫ່ງຊາດຊຸດທີ IX ຕາມຄາດໝາຍ; ພິຈາລະນາ, ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍຈຳນວນ 13 ສະບັບ ໃນນີ້, ມີກົດໝາຍສ້າງໃໝ່ 2 ສະບັບ; ຮັບຟັງການຊີ້ແຈງຂອງບັນດາສະມາຊິກລັດຖະບານຕໍ່ຄຳຊັກຖາມຂອງສະພາແຫ່ງຊາດໂດຍມີທ່ານນາຍົກລັດຖະມົນຕີ, ທ່ານຮອງນາຍົກລັດຖະມົນຕີ ເພື່ອພ້ອມກັນຊອກຫາວິທີແກ້ໄຂ ບັນດາສິ່ງທ້າທາຍທີ່ ສປປ ລາວ ພວມປະເຊີນໜ້າໃນປັດຈຸບັນ ແລະ ຮັບຟັງຜູ້ຕາງໜ້າຄະນະປະຈຳສະພາແຫ່ງຊາດ ລາຍງານຜົນການພິຈາລະນາ ແລະ ຕົກລົງຂອງກອງປະຊຸມຄະນະປະຈຳສະພາແຫ່ງຊາດສະໄໝວິສາມັນ ເພື່ອລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX; ພ້ອມດຽວກັນຍັງໄດ້ຮັບຟັງການເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອ 7 ຂອງສະພາປະຊາຊົນແຂວງຫຼວງນ້ຳທາຊຸດທີ II ເຊິ່ງໄດ້ພິຈາລະນາ, ຮັບຮອງເອົາບັນຫາສຳຄັນຂອງແຂວງຄື: ພິຈາລະນາ, ຮັບຮອງເອົາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳ 6 ເດືອນຕົ້ນປີ 2024; ພິຈາລະນາຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ໃນການຈັດຕັ້ງປະຕິບັດແຜນງົບປະມານ ແຫ່ງລັດປະຈຳ 06 ເດືອນຕົ້ນປີ 2024 ແລະ ຄາດຄະເນປະຕິບັດໝົດປີ 2024 ຕາມການລາຍງານ ຂອງອົງການປົກຄອງແແຂວງ; ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດບັນດາຄາດໝາຍວຽກງານພັດທະນາຊົນນະບົດແລະແກ້ໄຂຄວາມທຸກຍາກ 6 ເດືອນຕົ້ນປີ 2024 ແລະທິດທາງແຜນການ 6 ເດືອນຕົ້ນ ປີ 2024 ແລະ ໄດ້ພິຈາລະນາຮັບຮອງເອົາລາຍງານການຈັດຕັງປະຕິບັແຜນການເຄື່ອນໄຫວວຽກງານແຕ່ກອງປະຊຸມສະໄໝສາມັນ ເທື່ອທີ 6 ຫາ ເທື່ອທີ 7 ແລະ ທິດທາງແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ8ຂອງສະພາປະຊາຊົນແຂວງຫຼວງນ້ຳທາ ຊຸດທີ II.

# ສພຂ ເຊກອງ ຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານຂົງເຂດວັດທະນະທຳ-ສັງຄົມ



(ສພຊ) - ວັນທີ 20-22 ສິງຫາ 2024, ທ່ານ ນາງ ຄຳເສັງ ທຸມມະວົງສາ ຄະນະປະຈຳຮອງປະທານສະພາປະຊາຊົນແຂວງ ພ້ອມດ້ວຍຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ສະພາປະຊາຊົນແຂວງ ແລະ ຂະແໜງການທີ່ກ່ຽວຂ້ອງ ໄດ້ເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ກ່ຽວກັບການຄຸ້ມຄອງແຮງງານ ແລະ ການຈັດຕັ້ງປະຕິບັດບັນດາຄາດໝາຍຕ່າງໆໃນຂົງເຂດວັດທະນະທຳ-ສັງຄົມຢູ່ເມືອງທ່າແຕງ ໂດຍການຕ້ອນຮັບຢ່າງອົບອຸ່ນຈາກທ່ານ ແສງລາຕີ ຫຼອມຍະເດດ ວ່າການເລຂາພັກເມືອງ, ເຈົ້າເມືອງເມືອງທ່າແຕງ, ຫົວໜ້າຄະນະ ສສຂ ປະຈຳເຂດເລືອກຕັ້ງເມືອງທ່າແຕງ, ມີບັນດາທ່ານຄະນະສສຂ ປະຈຳເມືອງ, ຄະນະປະຈຳພັກເມືອງ, ຫົວໜ້າ-ຮອງຫ້ອງການ ຕະຫຼອດຮອດພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ການລົງເຄື່ອນໄຫວວຽກງານໃນຄັ້ງນີ້ແມ່ນໄດ້ເຮັດວຽກຮ່ວມກັບບັນດາຫ້ອງການທີ່ກ່ຽວຂ້ອງຂອງເມືອງ ເປັນຕົ້ນ: ຫ້ອງການສຶກສາທິການ ແລະ ກິລາ; ຫ້ອງການສາທາລະນະສຸກ; ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ; ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ; ຫ້ອງການກະສິກຳ ແລະ ປ່າໄມ້ ແລະ ຫ້ອງການພາຍໃນ ໂດຍໄດ້ຮັງຟັງການລາຍງານກ່ຽວກັບສະພາບການຈັດຕັ້ງປະຕິບັດວຽກງານ ໃນໄລຍະຜ່ານມາ ໂດຍສະເພາະບັນດາຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ຈຸດດີ, ຈຸດອ່ອນ, ຂໍ້ຄົງຄ້າງ ແລະ ຄຳສະເໜີຕ່າງໆທີ່ເປັນອັນຈຳເປັນ ພ້ອມທັງ, ຮັບຟັງການຊີ້ແຈງກ່ຽວກັບການຈັດຕັ້ງປະຕິບັດບັນບັນດາຄາດໝາຍສູ້ຊົນໃນແຕ່ລະຂົງເຂດວຽກງານ.

ພ້ອມນັ້ນ, ທ່ານ ຮອງປະທານສະພາປະຊາຊົນແຂວງ ພ້ອມຄະນະຍັງໄດ້ລົງຕິດຕາມກວດກາ ແລະ ເກັບກຳສະພາບຕົວຈິງຢູ່ບັນດາບໍລິສັດ ກ່ຽວກັບການປະຕິບັດສັນຍາແຮງງານ, ການນຳໃຊ້ແຮງງານ ແລະ ກົດລະບຽບພາຍໃນ ລະຫວ່າງຜູ້ໃຊ້ແຮງງານກັບຜູ້ອອກແຮງງານ ນຳບໍລິສັດຄູນມີໄຊ, ບໍລິສັດບີດີນາ, ບໍລິສັດຮວງແອ້ງ ແລະ ບໍລິສັດແອວວີເອັບ ຕື່ມອີກ.

**(ນາລີວັນ ແສງມະນີວົງ)**

# ເຝິກອົບຮົມວຽກງານຕິດຕາມກວດກາ, ການຄົ້ນຄວ້າ, ພິຈາລະນາ ແລະ ການເກັບກຳຂໍ້ມູນຄຳຮ້ອງຂໍຄວາມເປັນທຳ

(ສພຊ) - ກອງປະຊຸມເຝິກອົບຮົມວຽກງານຕິດຕາມກວດກາ, ການຄົ້ນຄວ້າ, ການພິຈາລະນາ ແລະ ການເກັບກຳຂໍ້ມູນ ຄຳຮ້ອງຂໍຄວາມເປັນທຳໃຫ້ສະມາຊິກສະພາປະຊາຊົນແຂວງ ແລະ ພະນັກງານ-ລັດຖະກອນຂອງສະພາປະຊາຊົນແຂວງ ໄດ້ຈັດຂຶ້ນໃນລະຫວ່າງວັນທີ12ຫາ13ສິງຫາ 2024 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໂດຍການເປັນປະທານຂອງທ່ານ ນາງ ມີນາພອນ ໄຊສົມພູ ຮອງເລຂາພັກແຂວງ ປະທານສະພາປະຊາຊົນແຂວງ, ມີທ່ານ ອຳໄພ ຈິດມະນີ ຮອງປະທານກຳມາທິການກົດໝາຍສະພາແຫ່ງຊາດ; ມີບັນດາທ່ານຮອງປະທານສະພາປະຊາຊົນແຂວງ,ຄະນະກຳມະການ, ຄະນະເລຂາທິການ, ສະມາຊິກສະພາປະຊາຊົນແຂວງ, ຫົວໜ້າກົມຄຳຮ້ອງຂໍຄວາມເປັນທຳ ສະພາແຫ່ງຊາດ, ພາກສ່ວນທີ່ກ່ຽວຂ້ອງ ແລະ ພະນັກງານ-ລັດຖະກອນພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ.



ເພື່ອເຮັດໃຫ້ສະມາຊິກສະພາປະຊາຊົນແຂວງ, ພະນັກງານ-ລັດຖະກອນຂອງສະພາປະຊາຊົນແຂວງ ໄດ້ຮັບການຍົກລະດັບຄວາມຮັບຮູ້ເຂົ້າໃຈ, ຄວາມສາມາດເຮັດໃຫ້ການປະຕິບັດພາລະບົດບາດໃນນາມເປັນຕົວແທນແຫ່ງສິດແລະຜົນປະໂຫຍດອັນຊອບທຳຂອງປະຊາຊົນລາວບັນດາເຜົ່າຊາວແຂວງອັດຕະປື ໃຫ້ມີປະສິດທິພາບ, ປະສິດທິຜົນສູງສຸດແລະການເປັນເສນາທິການໃຫ້ແກ່ສະພາປະຊາຊົນແຂວງຢ່າງເປັນລະບົບຄົບຊຸດ, ມີປະສິດທິພາບ ແລະ ເປັນເອກະພາບ, ຕອບສະໜອງໃຫ້ໄດ້ຄວາມຮຽກຮ້ອງຕ້ອງການໃນການປະຕິບັດໜ້າທີ່ວຽກງານຕົວຈິງໃນໄລຍະໃໝ່.

ກອງປະຊຸມຄັ້ງນີ້, ໄດ້ຮັບຟັງການສະເໜີບົດຮຽນກ່ຽວກັບການຄົ້ນຄວ້າຮ່າງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ, ບົດຮຽນກ່ຽວກັບການຄົ້ນຄວ້າ ແລະ ການພິຈາລະນາ ຄຳຮ້ອງຂໍຄວາມເປັນທຳ, ບົດຮຽນກ່ຽວການຮັບຄຳຮ້ອງຂໍຄວາມເປັນທຳ, ການຕ້ອນຮັບ ແລະ ການໃຫ້ຄຳປຶກສາ, ບົດຮຽນກ່ຽວກັບການກະກຽມເອກະສານ ແລະ ການຮ່າງບົດລາຍງານກ່ອນການລົງພົບປະຜູ້ມີສິດເລືອກຕັ້ງ; ພ້ອມນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມຍັງໄດ້ປະກອບຄຳຄຳເຫັນ, ສົນທະນາແລກປ່ຽນ ແລະ ຖອດຖອນບົດຮຽນເຊິ່ງກັນແລະກັນຢ່າງກົງໄປກົງມາຕໍ່ກັບບັນດາເນື້ອໃນ ທີ່ໄດ້ນຳສະເໜີ ເພື່ອມາປັບໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານຂອງຕົນໃຫ້ມີຄວາມເຂັ້ມແຂງ, ມີຄວາມສະດວກແລະມີປະສິດທິຜົນຫຼາຍຂຶ້ນກວ່າເກົ່າ

**(ວິນັດ ສີສຸລາດ)**




# ໂຄສະນາເກີນຈິງ ກັບສິນຄ້າປອມ

# ດົ້ນກົບເມກ

ຜູ້ຂຽນພະຍາຍາມຕິດຕາມອ່ານຂ່າວສະພາບເຫດການເກີດຂຶ້ນໃນສັງຄົມ ສ່ວນໜຶ່ງໄດ້ພົບເລື່ອງນັກເລງຂາຍສິນຄ້າອອນລາຍໂຄສະນາເກີນຈິງ, ເກີນສັບພະຄຸນ ບາງຄົນຕົວະຕົ້ມຫຼອກລວງ ຍົວະໃຫ້ໂອນເງິນກ່ອນຈຶ່ງສົ່ງສິນຄ້າ ແລ້ວກໍປິດເຟສຫາຍເຂົ້າກົບເມກ, ກະແສໂລກທຸກມື້ນີ້ ຄົນມີທ່າອ່ຽງຢາກສະບາຍ, ບໍ່ຢາກເສຍເວລາອອກເຮືອນ ເລືອກຊື້ສິນຄ້າອອນລາຍ ຫຼາຍຄົນກໍພົບບັນຫາສິນຄ້າຕົວຈິງບໍ່ກົງປົກຕາມໂຄສະນາໄວ້.

ຜູ້ຂຽນເຄີຍນັ່ງຟັງສະພາກາເຟ ທີ່ມີພະນັກງານບໍານານທີ່ຜ່ານວຽກດ້ານສື່, ພວກເພິ່ນໄດ້ໃຫ້ຄໍາເຫັນວ່າ: ຕໍ່ການແກ້ໄຂຂ່າວປອມ, ຂາຍສິນຄ້າປອມ, ໂຄສະນາເກີນຈິງນັ້ນ ເຮົາຄວນຕັ້ງຄະນະສະເພາະກິດແກ້ໄຂບັນຫາ, ຖ້າວ່າມີບັນຫາ ຮຽກຮ້ອງແຈ້ງມາຄະນະສະເພາະກິດຄົ້ນຄວ້າຊີ້ແຈງແຕ່ລະປະເດັນ ຈະເຮັດໃຫ້ສັງຄົມມີທີ່ເພິ່ງ-ມີທາງອອກ, ຊອກວິທີຕິດຕາມກວດກາ, ປັບໃໝໃສ່ໂທດຕໍ່ຜູ້ເຈດຕະນາຫຼອກລວງຂາຍສິນຄ້າປອມ, ໂຄສະນາເກີນຈິງ.

ຜູ້ຂຽນຂໍຍົກເອົາຄໍາເຫັນເຈົ້າຂອງນາມປາກກາແນວລາວ ຄືທ່ານ ຄໍາວິສັນ ແກ້ວສຸວັນ ທີ່ເພິ່ນມີບົດຮຽນ, ປະສົບການເຮັດໜ້າທີ່ສື່ມາຍາວນານ ເພິ່ນໄດ້ໃຫ້ຄໍາເຫັນວ່າ: ຖ້າເຮົາບໍ່ມີຄະນະສະເພາະກິດແກ້ໄຂ ສັງຄົມຈະສັບສົນ ຂາດທີ່ເພິ່ງ ເພາະຜູ້ຕົກເປັນເຫຍື່ອບໍ່ມີທີ່ເພິ່ງ-ບໍ່ຮູ້ບ່ອນໄປແຈ້ງເອົາຄວາມຜິດກັບຜູ້ຕົວະຕົ້ມຫຼອກລວງ ເຂົ້າທໍານອງຜູ້ມີຫົວ 18 ມົງກຸດຍິ່ງໄດ້ໃຈ-ຊອກແຕ່ວິທີຫາກິນງ່າຍໆ ສ້າງພາບພົດໜ້າເຊື່ອຖືໂຄສະນາຂາຍສິນຄ້າ, ຫຼອກໃຫ້ລູກຄ້າໂອນເງິນມາກ່ອນແຕ່ໄດ້ຮັບສິນຄ້າບໍ່ໄດ້ຄຸນນະພາບ ຫຼື ບາງກໍລະນີໄດ້ເງິນຈາກລູກຄ້າຫຼາຍແລ້ວກໍຫຼົບໜີ ເຊິ່ງກາຍເປັນບັນຫາຂອງສັງຄົມ ການຈັດຕັ້ງກ່ຽວຂ້ອງຕາມຫຼັກການກໍຕ້ອງໄດ້ແກ້ໄຂ, ຄວບຄຸມ ບໍ່ແມ່ນປ່ອຍປະລະເລີຍ.

ຂ່າວລວງ-ຂ່າວປອມ, ໂຄສະນາຊວນເຊື່ອ, ຂ່າວແຝງໂຄສະນາ ວິທະຍາສາດລວງໂລກ, ຂ່າວໃຫ້ຂໍ້ມູນຜິດ-ຫຼອກລວງ... ບັນຫາດັ່ງກ່າວ ຄວນຖືກແກ້ໄຂ, ຊີ້ແຈງຊັດເຈນ ຖ້າເຮົາປະຽຽບ ສັງຄົມຈະມີບັນຫາຍາວນານ...!







# ວິທີເຮັດວຽກ

**ພາກທີ 6**
**ວິທີນໍາ**

ວຽກການຍິ່ງຫຍຸ້ງຍາກພຽງໃດ ການນໍາກໍຍິ່ງຕ້ອງປະສານກັບປະຊາຊົນ ແລະ ຍິ່ງຕ້ອງປະສານນະໂຍບາຍລວມກັບການທົດລອງແຕ່ລະແຫ່ງຫຼາຍພຽງນັ້ນ. ເພື່ອທັບມ້າງວິທີທີ່ເຮັດແບບມະລຸ້ມມະລ້ອຍຕາມແບບອາດຍາ ແລະ ແບບນັ່ງຢູ່ໃນແຕ່ໃນຫ້ອງການ.

**3. ຮຽນຖ້ອຍຖາມປະຊາຊົນ, ແຕ່ບໍ່ແລ່ນຕາມກົ້ນປະຊາຊົນ.**

ປະຊາຊົນນັ້ນແມ່ນສະຫຼາດສະຫຼຽວ, ແມ່ນຫ້າວຫັນ, ແມ່ນກ້າຫານທີ່ສຸດ. ເພາະສະນັ້ນ, ພວກເຮົາຕ້ອງຮຽນນໍາປະຊາຊົນ ຕ້ອງຖາມປະຊາຊົນ, ຕ້ອງເຂົ້າໃຈປະຊາຊົນ, ເພາະສະນັ້ນ ແຕ່ລະຄໍາຂວັນແຕ່ລະວຽກງານ ແຕ່ລະນະໂຍບາຍຂອງພວກເຮົາ ຕ້ອງອີງໃສ່ຄໍາຄິດຄໍາເຫັນ ແລະ ບົດຮຽນຂອງປະຊາຊົນ, ຕ້ອງຟັງຄວາມມັກ ແລະ ຄວາມເຫັນຂອງປະຊາຊົນ.

ຖ້າຢາກຮູ້, ຢາກເຂົ້າໃຈປະຊາຊົນ ຢາກຮູ້ຮຽນຖ້ອຍຖາມປະຊາຊົນ ກໍຈໍາເປັນຕ້ອງມີຄວາມຈິງໃຈ, ມີຄວາມຕັດສິນໃຈ, ມີຄວາມຖ່ອມຕົວ ແລະ ຕ້ອງອົດທົນຄວາມທຸກຍາກລໍາບາກ. ດັ່ງນັ້ນ ປະຊາຊົນກໍຈະບໍ່ເຊື່ອພວກເຮົາ ເຂົາເຈົ້າຮູ້ຫຍັງກໍຈະບໍ່ເວົ້າໃຫ້ພວກເຮົາຟັງ ແມ່ນວ່າເວົ້າ ເຂົາເຈົ້າກໍຈະບໍ່ເວົ້າໝົດຄວາມຂອງເຂົາເຈົ້າ.

ອ່ານຕໍ່ສະບັບໜ້າ...




# ລາດເລົາ- ຈັງຫວະ- ໂອກາດ

'ລາດເລົາ' ເປັນຄໍານາມ ບໍ່ປາກົດເຫັນບັນທຶກໄວ້ໃນວັດຈະນານຸກົມພາສາລາວສະບັບໃດ ນອກຈາກວັດຈະນານຸກົມລາວ-ຝຣັ່ງ ເຫຼັ້ມ 2 (Dictionnaire Lao-Français Tom 2) ປີ 1970 ໄດ້ບັນທຶກໄວ້ ໂດຍໃຫ້ຄວາມໝາຍເປັນພາສາຝຣັ່ງວ່າ la trace, l'indice ແລະມີວົງເລັບຊ້ອນທ້າຍວ່າ (Si.) ເຊິ່ງໝາຍເຖິງເປັນຄໍາທີ່ມີຈາກສະຫຍາມ ຫຼືໄທ. ເວລານໍາມາໃຊ້ຕົວຈິງ 'ລາດເລົາ' ມີຄວາມໝາຍວ່າ "ທ່ວງທ່າ, ທ່າທີ, ຊ່ອງທາງ, ໂອກາດເໝາະ" ເຊັ່ນ

- ຕໍາຫຼວດເບິ່ງລາດເລົາກ່ອນຊິເຂົ້າໄປຈັບພວກຄ້າຢາບ້າ.
- ທີມງານສ້າງຮູບເງົາໄດ້ລົງໄປເບິ່ງບັນຍາກາດ ແລະ ລາດເລົາຂອງສະຖານທີ່ແຫ່ງນັ້ນ ກ່ອນຈະລົງມືຖ່າຍທໍາຕົວຈິງ.
- ຫຼັງຈາກທີ່ຂົວມິດຕະພາບລາວ-ໄທແຫ່ງທີ 3 ຄໍາມ່ວນ-ນະຄອນພະນົມ ເປີດໃຊ້ຢ່າງເປັນທາງການ ເຮັດໃຫ້ຊາວໄທສົນໃຈເຂົ້າໄປເບິ່ງລາດເລົາການລົງທຶນໃນເຂດເສດຖະກິດພິເສດພູຂຽວ.

'ຈັງຫວະ' ເປັນຄໍານາມ ອາດໄດ້ເຄົ້າມາຈາກພາສາຂະແມ ຈັງວາກ ແລ້ວແຜງສຽງເປັນ 'ຈັງຫວະ' ໝາຍເຖິງ "ໄລຍະທີ່ສະໝໍ່າສະເໝີ" ເຊັ່ນ

- ຫົວໃຈເຕັ້ນເປັນຈັງຫວະ.
- ເວລາທີ່ເຮົາຕື່ນເຕັ້ນ ເຮັດໃຫ້ຫົວໃຈເຕັ້ນບໍ່ເປັນຈັງຫວະ.

'ຈັງຫວະ' ຍັງໝາຍເຖິງ "ໄລຍະທີ່ກໍານົດໄວ້ເປັນຕອນໆ" ເຊັ່ນ

- ເພງລາວເດີມມີຈັງຫວະຊ້າ, ແຕ່ເພງສະໄໝໃໝ່ບາງເພງ ມີຈັງຫວະໄວ.

'ຈັງຫວະ' ຍັງໝາຍເຖິງ "ໂອກາດອັນຄວນ" ເຊັ່ນ

- ລາວມັກເວົ້າຂັດຈັງຫວະໝູ່ຕະຫຼອດ.
- ພວກເຮົາກໍາລັງລົມກັນມ່ວນໆແຕ່ລາວມາຂັດຈັງຫວະເຮັດໃຫ້ເສຍຄວາມຮູ້ສຶກ.
- ນັກວິເຄາະເສດຖະກິດຄາດວ່າ ຈັງຫວະເຕີບໂຕຂອງເສດຖະກິດຂອງປະເທດກໍາລັງພັດທະນາໃນປີໜ້າຈະບັນລຸຕາມລະດັບຄາດໝາຍ.

'ໂອກາດ' ເປັນຄໍານາມຈາກເຄົ້າປາລີ Okāsa ໂອກາສະ ແຜງສຽງເປັນຄໍາລາວວ່າ 'ໂອກາດ' ໝາຍເຖິງ "ເວລາທີ່ເໝາະສົມ, ເວລາທີ່ເໝາະສົມກັບຈັງຫວະພໍດີ, ຊ່ອງທາງ, ປ່ອງທາງ" ເຊັ່ນ

- ລາວບໍ່ມີໂອກາດໄດ້ໄປຮຽນຕໍ່.
- ເປັນໂອກາດດີທີ່ໄດ້ມາພົບພໍ້ກັນ.
- ຂ້ອຍຢາກຫາໂອກາດໄປລົມວຽກກັບເຈົ້າ.
- ເຈົ້າເຮັດວຽກຢູ່ນີ້ ໂອກາດຊິກ້າວໜ້າກ້າວຕາມີຫຼາຍ.

**# ຂໍ້ສັງເກດ:** ຄໍາວ່າ 'ລາດເລົາ' ຈໍານວນຖີ່ໃນການໃຊ້ແມ່ນມີໜ້ອຍ ພ້ອມກັນນັ້ນບາງຄົນກໍອອກສຽງພ້ຽນເປັນ 'ລາດລາວ'.



# ຂຽນຄໍາລາວໃຫ້ຖືກ

#ຄູແສງ

| ຄໍາຖືກ | ຄໍາຜິດ |
|---|---|
| ໄປສູ່ສຸຄະຕິ | ~~ໄປສູ່ສຸຂະຕິ~~ |
| ຮັກສາສຸຂະພາບ | ~~ຮັກສາສຸຄະພາບ~~ |
| ໄວ້ອາໄລ | ~~ໄຫວ້ອາໄລ~~ |
| ໄຫວ້ພະທາດ | ~~ໄວ້ພະທາດ~~ |
| ນ້ຳເຫື່ອ | ~~ນ້ຳເອື່ອ~~ |
| ເອື່ອເອືອງ | ~~ເຫື່ອເອືອງ~~ |
| ແຫ່ຜາສາດເຜີ້ງ | ~~ແຮ່ຜາສາດເຜີ້ງ~~ |
| ບໍ່ແຮ່ | ~~ບໍ່ແຫ່~~ |



## ສຸກສະບາຍທາຍໂລດ

# ດື່ມນ້ຳໝາກນາວ ຊ່ວຍຫຼຸດຄວາມຕຸ້ຍ

ໂດຍ: ທິວກະທິ



ມື້ນີ້ຄໍລຳສຸຂະພາບຈະມາແນະນຳເຄັດລັບສູດນ້ຳໝາກນາວຫຼຸດຄວາມຕຸ້ຍ ແລະ ຍັງຊ່ວຍຫຼຸດໜ້າທ້ອງດື່ມກ່ອນນອນ ໜ້າທ້ອງຍຸບແນ່ນອນ ເຊິ່ງມີສູດແລະສ່ວນປະກອບດັ່ງນີ້:

- ໝາກນາວ 1 ໜ່ວຍ
- ນ້ຳອຸ່ນ 1 ຈອກ
- ນ້ຳຕານແດງ ຫຼື ນ້ຳເຜີ້ງ 2 ບ່ວງກາເຟ
- ເກືອໜ້ອຍດຽວ (ປາຍບ່ວງກາເຟ)

• **ວິທີເຮັດ:**

1. ຂັ້ນຕອນທຳອິດເອົານ້ຳຕານກັບເກືອລົງລະລາຍໃນຈອກນ້ຳອຸ່ນປະໄວ້ໃຫ້ນ້ຳເຢັນລົງ
2. ຂັ້ນຕອນທີສອງເມື່ອນ້ຳເຢັນລົງແລ້ວ ໃຫ້ບີບນ້ຳໝາກນາວລົງໃສ່ ຄົນໃຫ້ເຂົ້າກັນແລ້ວກິນໄດ້ເລີຍ ຫຼື ຈະໃສ່ນ້ຳກ້ອນກິນກໍຍິ່ງແຊບຕື່ມອີກ (ເວລາທີ່ດີທີ່ສຸດ ຄືກິນກ່ອນນອນຈັກ 15-20 ນາທີ)

ກິນປະຈຳທຸກວັນ 4 ເດືອນກໍເຫັນຜົນ ແອວນ້ອຍລົງ ຍິ່ງຖ້າກິນທຸກມື້ ໄດ້ຮັບວິຕາມິນຊີ ແລະ ແຄວຊ່ຽມ ເຮັດໃຫ້ຮ່າງກາຍແຂງແຮງ, ບໍ່ເປັນຫວັດງ່າຍ, ກະດູກແຂງແຮງ, ໄຂມັນໃນເລືອດກໍຈະຫຼຸດລົງ, ກົດຢູລິກໍຈະຫຼຸດລົງ, ໄຕກຣີນເຊີໄລກໍຈະປົກກະຕິ, ໄຂມັນທີ່ບໍ່ດີຈະຫຼຸດລົງ ແລະ ໄຂມັນດີກໍຈະເພີ່ມຂຶ້ນ.

**ຂໍ້ມູນຈາກ:**
www.laopost.com





## ຫັກຫາຍ ລະບາຍ

(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)

# ສ້ຽມທ້ຽນ

* **ວັນ**ທີ 2 **ກັນຍາ**ໃນປີນີ້ ເປັນມື້**ໄຂສົກຮຽນໃໝ່**ທົ່ວປະເທດ ເປັນເທດການຄຶກຄື້ນ ສົກຮຽນໃໝ່ໄຂພິທີເຕັມທີ່ ຍາມໄປ-ມາ ລົດຕິດຄາຄ້າງ ບ່າຄະໜົນຈົນບໍ່ມີບ່ອນອ້າງ ທາງຄົນລົດໄຕ່ ແທຍ້ກັບໄປວົ່ງແໜັບ ຊາມຊາຮອດບ່ອນໝາຍ ລຽນເປັນແຖວຊ້າຍລ້າຍ ເກົ່າງໃໝ່ຄັບງາມ ທາງສາມເລນຕັນເຕັມ ຄ່ອຍເຄື່ອນເໜັງຫຍັບຍ້າຍ ສ່ອນລົດຈັກກະເລີຍໄດ້ ປີນໄປຕາມທາງຍ່າງ ເພາະທາງຫຼວງບໍ່ຄ່ອຍອ້າງ ພໍໃຫ້ໄຕ່ເດີນ ໜ່າຍເດ **ລົດຈັກລົ່ນ!**

* **ເດືອນ**ເກົ້າ **ບຸນຫໍ່ເຂົ້າປະດັບດິນ** ເປັນມື້ວັນສິບດັບທຍັບຈົ່ມເຂົ້າມາ ປະເພນີສືບສ້າງ ຊາວພຸດທະກຽມ ຕຽມອາຫານຄາວຫວານ ຫໍ່ໝົກຄຸວາຍໃຫ້ຝາກສົ່ງໄປຍັງເບື້ອງດວງວິນຍານຍາດມິດ ສ່ຳພະເວສີພ່ານພ້ອມ ຄົນລາວຮູ້ທົ່ວເຖິງ **ບົ້ນແລ້ວ!**




## ອາດ ກະວີລາວ

# ອອນລາຍ 108

# ສາວຄູ ວັງຄຶກລື່ນ

* ບໍ່ໄດ້ຫາໃສ່ຮ້າຍ
ພຽງແຕ່ເຫັນມາຫຼາຍ
ເຂົາວ່າປັດຈຸບັນນີ້
ອອນລາຍຂາຍໂຜ່ຂຶ້ນ

ຈາຈົ່ມໂຈມຕີ ດອກນາ!
ຈຶ່ງເອົາມາເວົ້າ
ທັນສະໄໝຫຼາຍຢ່າງ
ເຕັມບ້ານທົ່ວເມືອງ

* ຜູ້ຂາຍຫວັງຢາກໄດ້
ຖືວ່າເປັນກົດເກນ
ສີ່ຫ້າພັນພໍກຸ້ມ
ພໍໄດ້ຂອງເຄື່ອງໃຊ້

ກຳໄລແລ່ນມາມີ
ແຫ່ງການຂາຍຄ້າ
ໂຮມທຶນຮອບໃໝ່
ທັງໄດ້ເຂົ້າໝ່າແລງ ນັ້ນແລ້ວ!

* ບາງພ່ອງໂພດເຮັ່ງຮ້າຍ
ນຳບັນຫາສູ່ສັງຄົມ
ຫາວິທີທາງໄດ້
ເຂົາໂອນຊູ່ກັບແລ້ວ

ຫວັງກອບໂກຍກຳ
ບໍ່ຄຳນຶງຜົນຮ້າຍ
ໂກງກິນເງິນໝູ່
ພັດລາລີ້ຫຼືກໜີ (block)

*ສ່ວນຄົນຊອກສ່ອງຊື້
ເຫັນມີຈ່າຍປາຍທາງ
ເຄື່ອງຂອງເຂົາສົ່ງໄປໃຫ້
ຕິດຕໍ່ຫາບໍ່ໄດ້

ໃນສື່ອອນລາຍ
CF ໄວພະລັນຟ້າວ
ເມີນເສີຍມິດຈີ່ລີ່
ຫາຍຈ້ອຍບໍ່ຕອບແຊັດ ໝ່າຍເດ!

* ບາງພ່ອງພັດແອບອ້າງ
ລູກຄ້າກົດຕິດຕາມ
ບາດວ່າຄວາມຈິງນັ້ນ
ຊຸມໝູ່ຄົນພວກນີ້ ຫາແຕ່ແນວຫຼອກລໍ້

ວາງທ່າໂຄສະນາ
ໝື່ນແສນເປັນລ້ານ
ຕົວຕົນບໍ່ມີຢູ່
ເປັນມານຮ້າຍແກ່ສັງຄົມ ແທ້ໄດ!

* ເຫັນໃຈຊຸມແມ່ຄ້າ
ອາໄສຂາຍຫາເງິນ
ທັງເຫັນໃຈຄົນຊື້
ສຸດທ້າຍຂອງສັ່ງຊື້

ໂພສຜ່ານອອນລາຍ ເດນໍ
ສິ່ງເສີມຄອບຄົວລ້ຽງ
ຈຳເປັນຈຶ່ງໂອນຈ່າຍ
ພັດຜິດພ້ຽນບໍ່ຕົງປົກ ນັ້ນແລ້ວ!

* ບໍ່ອາດເວົ້າຄຶບສ້ຽງ
ຫຼາຍເຫດການມີມາ
ກ່ອນແຜ່ລາມວົງກວ້າງ
ຫ່ວງປວງປະຊາພີ່ນ້ອງ

ບັນຫາເກີດອອນລາຍ
ຊ່ວຍຫາທາງແກ້
ຫຼວງຫຼາຍໜັກໜ່ວງ
ຈຶ່ງຈາເວົ້າສູ່ຟັງ ທ່ານເອີຍ!

## ຊວນຍິ້ມ

# ແອ່ບຕຸ້ງ

### ເລື່ອງ: ສ່ຳພາດ

ພໍ່ຕູ້3ຄົນກຳລັງນັ່ງຫຼິ້ນຢູ່ກ້ອງຕົ້ນໄມ້ ມີນັກຂ່າວຄົນໜຶ່ງຢາກຂໍສ່ຳພາດ ຈຶ່ງຖາມຂຶ້ນວ່າ:

**ນັກຂ່າວ:** ຂໍອະນຸຍາດສ່ຳພາດ ບໍ່ຮູ້ວ່າພໍ່ຕູ້ສະດວກບໍ່ ຊ່ວຍບອກວິທີ ທີ່ເຮັດໃຫ້ອາຍຸຍືນຍາວແດ່ ?

ພໍ່ຕູ້ທັງສາມຄົນ ເຫັນດີຈະໃຫ້ສ່ຳພາດ ຈຶ່ງຕອບໄປວ່າ:

**ຄົນທຳອິດ:** ຂ້ອຍບໍ່ດື່ມເຫຼົ້າ ບໍ່ສູບຢາ ມີເມຍຄົນດຽວ ຕອນນີ້ ຂ້ອຍອາຍຸ 93 ປີແລ້ວ.

**ຄົນທີສອງ:** ຂ້ອຍດື່ມເຫຼົ້າເລັກນ້ອຍ ສູບຢາເປັນບາງໂອກາດ ແລະ ນອກລູ່ນອກທາງບາງຄັ້ງ ຕອນນີ້ຂ້ອຍອາຍຸ 91 ປີ.

**ຄົນສຸດທ້າຍ:** ຂ້ອຍເປັນຄົນຫຼິ້ນສາວ ດື່ມເຫຼົ້າຈົນໝົດສະຕິ ແລະ ສູບຢາມື້ລະຫຼາຍຊອງ ແລະ ຕອນນີ້ອາຍຸຂ້ອຍໄດ້ 29 ປີ.

**ນັກຂ່າວ:** ????????



## ຄະຕິເຕືອນໃຈ

# ດອກຫຍ້າ

ຈະສູງຫຼືຕ່ຳ ຢູ່ທີ່ການທຳຕົວ
ຈະດີຫຼືຊົ່ວ ກໍຢູ່ທີ່ຕົວເຮົາເປັນຄົນກຳນົດ




# ສານສີລັງກາ ຕັດສິນໃຫ້ປະທານາທິບໍດີ ມີຄວາມຜິດເລື່ອນການເລືອກຕັ້ງທ້ອງຖິ່ນ



ສານສູງສຸດຂອງສີລັງກາ ຕັດສິນໃຫ້ປະທານາທິບໍດີ ຣານິນ ວິກຣິມສິງເຫ (Ranil Wickremesinghe) ມີຄວາມຜິດໃນ "ການປະພຶດທີ່ຜິດກົດໝາຍ" ໂດຍການເຮັດໃຫ້ການເລືອກຕັ້ງທ້ອງຖິ່ນຊັກຊ້າເປັນເວລາຫຼາຍກວ່າໜຶ່ງປີ, ເຊິ່ງຖືກເບິ່ງວ່າເປັນການລົງປະຊາມະຕິຢ່າງບໍ່ເປັນທາງການກ່ຽວກັບການຄຸ້ມຄອງເສດຖະກິດຂອງເຂົາ.

ສຳນັກຂ່າວ AFP ລາຍງານວ່າ ຄຳຕັດສິນຂອງສານສູງສຸດໃນວັນທີ22 ສິງຫາຜ່ານມາ ຍັງບໍ່ມີຜົນທາງກົດໝາຍໃນທັນທີ ເນື່ອງຈາກທ່ານ ວິກຣິມສິງເຫ ໄດ້ຮັບເອກະສິດຄຸ້ມຄອງໃນຂະນະທີ່ດຳລົງຕຳແໜ່ງ, ແຕ່ສະພາບເສດຖະກິດຂອງສີລັງກາຄາດວ່າຈະເປັນບັນຫາສຳຄັນສຳລັບຜູ້ມີສິດລົງຄະແນນສຽງໃນການເລືອກຕັ້ງປະທານາທິບໍດີ ເຊິ່ງຈະຈັດຂຶ້ນໃນວັນທີ21 ກັນຍານີ້.

ເນື່ອງຈາກການເລືອກຕັ້ງທ້ອງຖິ່ນຖືກເລື່ອນອອກໄປ, ການເລືອກຕັ້ງປະທານາທິບໍດີໃນເດືອນນີ້ ຈຶ່ງຖືເປັນການເລືອກຕັ້ງຄັ້ງທຳອິດນັບຕັ້ງແຕ່ທ່ານວິກຣິມສິງເຫ ເປັນປະທານາທິບໍດີເມື່ອສອງປີກ່ອນ ພາຍຫຼັງຊາວສີລັງກາ ປະທ້ວງຄັ້ງໃຫຍ່ ສະແດງຄວາມໃຈຮ້າຍຕໍ່ວິກິດການທາງດ້ານການເງິນທີ່ບໍ່ເຄີຍມີມາກ່ອນເມື່ອເດືອນເມສາ 2022, ສົ່ງຜົນໃຫ້ປະທານາທິບໍດີ ໂກຕາພະຍາ ຣາຊະປັກສາ (Gotabaya Rajapaksa) ຜູ້ນຳຂອງປະເທດໃນເວລານັ້ນຕ້ອງລາອອກຈາກຕຳແໜ່ງ.

ຄະນະຜູ້ພິພາກສາ5ຄົນຂອງສານສູງສຸດ ມີມະຕິເປັນເອກະສັນວ່າ ທ່ານ ວິກຣິມສິງເຫ ບໍ່ໄດ້ຈັດສັນງົບປະມານເພື່ອຈັດການເລືອກຕັ້ງທ້ອງຖິ່ນໃນເດືອນມີນາ 2023 ເຖິງແມ່ນລັດຖະບານຂອງເຂົາກ່າວວ່າ ເງິນຂອງລັດມີຄວາມຈຳເປັນເພື່ອຈ່າຍໃຫ້ແກ່ລັດຖະກອນ ແລະ ຈັດສັນເປັນເງິນບຳນານກໍຕາມ; ສານສູງສຸດກ່າວຕື່ມວ່າ"ການປະພຶດໂດຍພະລະການ ແລະ ຜິດກົດໝາຍ" ຂອງທ່ານ ວິກຣິມສິງເຫ ໃນການຂັດຂວາງການເລືອກຕັ້ງທ້ອງຖິ່ນ ເຮັດໃຫ້ເກີດການລະເມີດສິດຕາມລັດຖະທຳມະນູນ, ພ້ອມທັງສັ່ງໃຫ້ຄະນະກຳມະການການເລືອກຕັ້ງເອກະລາດ ຈັດການເລືອກຕັ້ງທ້ອງຖິ່ນໄວເທົ່າທີ່ຈະໄວໄດ້ ໂດຍບໍ່ມີຜົນກະທົບຕໍ່ການເລືອກຕັ້ງປະທານາທິບໍດີທີ່ໃກ້ຈະມາເຖິງ.

ນອກຈາກນີ້, ລັດຍັງຖືກສັ່ງໃຫ້ຈ່າຍຄ່າທຳນຽມທາງກົດໝາຍ ແກ່ຜູ້ຍື່ນຄຳຮ້ອງຟ້ອງ 4 ຄົນ ທີ່ຄັດຄ້ານການເລື່ອນການເລືອກຕັ້ງອອກໄປຢ່າງບໍ່ມີກຳນົດ.

# "Kashmir" ຝັ່ງອິນເດຍ ກຽມຈັດການເລືອກຕັ້ງທ້ອງຖິ່ນ ຄັ້ງທຳອິດໃນຮອບ 10 ປີ




*ລັດຊຳມູ ແລະ ກັສມີຣ໌ (Jammu and Kashmir) ຫຼື ແຄວ້ນແຄຊເມຍຣ໌ທີ່ຢູ່ພາຍໃຕ້ອຳນາດອະທິປະໄຕຂອງອິນເດຍ ຈະຈັດການເລືອກຕັ້ງທ້ອງຖິ່ນເປັນຄັ້ງທຳອິດໃນຮອບ 10 ປີ ຫຼັງຈາກການເລືອກຕັ້ງໃນເຂດທີ່ຂັດແຍ້ງແຫ່ງນີ້ ຖືກຢຸດຊະງັກນັບຕັ້ງແຕ່ລັດຖະບານນິວແດນລີ ເຂົ້າປົກຄອງໂດຍກົງເມື່ອປີ 2019.*

ສຳນັກຂ່າວ AFP ລາຍງານຈາກເມືອງສຣີນະຄອນ ຫຼື ສີນາກາ (Srinagar) ປະເທດອິນເດຍ ເມື່ອວັນສຸກທີ 16 ສິງຫາຜ່ານມາວ່າ,ແຄວ້ນແຄຊເມຍຣ໌ ເຊິ່ງມີປະຊາກອນສ່ວນໃຫຍ່ເປັນຊາວມຸດສະລິມ ຖືກແບ່ງການຄວບຄຸມລະຫວ່າງອິນເດຍ ກັບປາກິດສະຖານ ນັບຕັ້ງແຕ່ທັງສອງປະເທດໄດ້ຮັບເອກະລາດຈາກອັງກິດ ໃນປີ 1947 ໂດຍຕ່າງຝ່າຍຕ່າງອ້າງສິດຄອບຄອງດິນແດນແຫ່ງນີ້.

ທ່ານ ຣາຈີບ ກຸມາຣ໌ (Rajiv Kumar) ປະທານຄະນະກຳມະການການເລືອກຕັ້ງຂອງອິນເດຍ ກ່າວຕໍ່ບັນດານັກຂ່າວໃນນະຄອນຫຼວງນິວແດນລີ (New Delhi) ວ່າ ການເລືອກຕັ້ງລະດັບທ້ອງຖິ່ນ ຈະຈັດຂຶ້ນໃນລັດຊຳມູ ແລະ ກັສມີຣ໌ ເຊິ່ງການລົງຄະແນນສຽງຈະແບ່ງອອກເປັນ 3 ຮອບ ໃນລະຫວ່າງວັນທີ 18 ກັນຍາ - 01 ຕຸລານີ້.

ຂະນະທີ່ຄະນະກຳມະການການເລືອກຕັ້ງຂອງອິນເດຍກ່າວຕື່ມວ່າ: ຈຳນວນຜູ້ມີສິດເລືອກຕັ້ງມີປະມານ 8.7 ລ້ານຄົນ ໂດຍບັດລົງຄະແນນຈາກທົ່ວພາກພື້ນຈະຖືກນັບລວມກັນໃນວັນທີ 04 ຕຸລາແລະຜົນການເລືອກຕັ້ງຈະປະກາດໃນວັນດຽວກັນ.

ເຖິງແມ່ນບາງຄົນຄິດວ່າ ການເລືອກຕັ້ງຄັ້ງນີ້ແມ່ນບາດກ້າວສຳຄັນໃນການຄືນສຽງໃຫ້ກັບປະຊາຊົນ ເພື່ອເລືອກເອົາຜູ້ນຳຂອງຕົນ; ແຕ່ນັກວິເຄາະຫຼາຍຄົນເວົ້າວ່າ ສະມາຊິກສະພານິຕິບັນຍັດ 90 ທີ່ນັ່ງ ຈະມີສິດອຳນາດໃນການຕັດສິນໃຈກ່ຽວກັບການສຶກສາ ແລະ ວັດທະນະທຳເທົ່ານັ້ນ, ສ່ວນອຳນາດໃນການຕັດສິນໃຈກ່ຽວກັບບັນຫາທີ່ສຳຄັນ ຍັງຈະຢູ່ໃນມືຂອງລັດຖະບານນິວແດນລີ.

# ທ່ານ ປູຕິນ ລົງນາມກົດໝາຍ ເພື່ອເຮັດໃຫ້ການຂຸດຄົ້ນ crypto ຖືກກົດໝາຍ




ປະທານາທິບໍດີລັດເຊຍ ທ່ານ ວະລາດິມີຣ໌ ປູຕິນ ໄດ້ລົງນາມໃນກົດໝາຍສະບັບໜຶ່ງ ເມື່ອວັນພະຫັດທີ 08 ສິງຫາຜ່ານມາ ເຊິ່ງຈະເຮັດໃຫ້ການຂຸດຄົ້ນເງິນຄຣິບໂຕ (cryptocurrency) ຖືກຕ້ອງຕາມກົດໝາຍຢ່າງເປັນທາງການໃນປະເທດນັບແຕ່ເດືອນພະຈິກ2024 ເປັນຕົ້ນໄປ, ອີງຕາມເອກະສານສະບັບໜຶ່ງທີ່ເຜີຍແຜ່ໃນເວັບໄຊຂໍ້ມູນຂ່າວສານທາງດ້ານກົດໝາຍຂອງລັດຖະບານ.

ພາຍໃຕ້ກົດໝາຍໃໝ່, ນິຕິບຸກຄົນ ແລະ ຜູ້ປະກອບການສ່ວນບຸກຄົນ ທີ່ລົງທະບຽນກັບກະຊວງການພັດທະນາດິຈິຕອນຂອງລັດເຊຍ ຈະໄດ້ຮັບອະນຸຍາດໃຫ້ດຳເນີນການຂຸດຄົ້ນເງິນຄຣິບໂຕ; ບຸກຄົນທີ່ຍັງບໍ່ໄດ້ລົງທະບຽນ ກໍສາມາດດຳເນີນການຂຸດຄົ້ນໄດ້, ພຽງແຕ່ຖ້າການໃຊ້ພະລັງງານຂອງພວກເຂົາບໍ່ເກີນຂອບເຂດທີ່ລັດຖະບານລັດເຊຍກຳນົດ.

ກົດໝາຍດັ່ງກ່າວຍັງຈະບັງຄັບໃຫ້ຜູ້ຂຸດຄົ້ນສົ່ງລາຍລະອຽດກ່ຽວກັບສະກຸນເງິນດິຈິຕອນທີ່ຕົນໄດ້ຮັບ ໄປຫາອົງການທີ່ໄດ້ຮັບອະນຸຍາດຈາກລັດຖະບານ; ອົງການທີ່ໄດ້ຮັບອະນຸຍາດ ຮ່ວມກັບທະນາຄານກາງລັດເຊຍ ຈະມີສິດອອກຄຳສັ່ງຫ້າມ ຫຼືຂໍ້ຈຳກັດການເຮັດທຸລະກຳສະກຸນເງິນດິຈິຕອນ ເພື່ອຮັກສາສະຖຽນລະພາບທາງດ້ານການເງິນຂອງລັດເຊຍ.

ໃນການປະຊຸມກັບບັນດາສະມາຊິກລັດຖະບານເມື່ອເດືອນກໍລະກົດ, ທ່ານ ປູຕິນ ໄດ້ປຶກສາຫາລືກ່ຽວກັບການແນະນຳ ແລະ ນຳໃຊ້ສະກຸນເງິນດິຈິຕອນ, ທ່ານກ່າວວ່າ: ຂະແໜງການທີ່ມີທ່າແຮງນີ້ ພວມມີທ່າອຽງທີ່ດີຂຶ້ນເລື້ອຍໆແລະກຳລັງຫັນປ່ຽນຮູບແບບໃໝ່ດ້ານການຄ້າ, ການທະນາຄານ ແລະ ການຊຳລະເງິນລະຫວ່າງປະເທດ.

"ສິ່ງສຳຄັນສຳລັບລັດເຊຍ ຄືການບໍ່ພາດໂອກາດສຳຄັນ, ກຳນົດຂອບກົດໝາຍ ແລະ ລະບຽບການຢ່າງທັນເວລາ, ພັດທະນາພື້ນຖານໂຄງລ່າງ ແລະ ສ້າງເງື່ອນໄຂສຳລັບການໄຫຼວຽນຂອງຊັບສິນດິຈິຕອນ ທັງພາຍໃນປະເທດ ແລະການພົວພັນກັບຄູ່ຮ່ວມງານຕ່າງປະເທດ" ທ່ານ ປູຕິນ ກ່າວ.

**ແຫຼ່ງຂ່າວ: ຊິນຮວາ**

# ລັດຖະສະພາລີບີ ປະຕິເສດການຕັດສິນໃຈຂອງສະພາປະທານາທິບໍດີ ທີ່ຈະສ້າງອົງການລົງປະຊາມະຕິແຫ່ງຊາດ



ວັນທີ 12 ສິງຫາ 2024 ສະພາຜູ້ແທນປະຊາຊົນ ຫຼື ລັດຖະສະພາ ທີ່ມີສຳນັກງານຕັ້ງຢູ່ພາກຕາເວັນອອກຂອງລີບີ ໄດ້ປະຕິເສດຕໍ່ການຕັດສິນໃຈຂອງສະພາປະທານາທິບໍດີ (Presidential Council) ທີ່ມີສຳນັກງານຕັ້ງຢູ່ນະຄອນຫຼວງຕຣິໂປລີ ທີ່ຈະສ້າງຕັ້ງອົງການໃໝ່ສຳລັບການລົງປະຊາມະຕິ ແລະການສອບຖາມແຫ່ງຊາດ.

ສະພາຜູ້ແທນປະຊາຊົນ ກ່າວໃນຖະແຫຼງການວ່າ "ການຕັດສິນໃຈນີ້ ເກີນຂອບເຂດອຳນາດຂອງສະພາປະທານາທິບໍດີ... ແລະ ໄດ້ຂ້າມຜ່ານຂອບເຂດອຳນາດລັດຖະສະພາ ທີ່ຕ້ອງການຄວາມຄິດເຫັນສ່ວນໃຫຍ່ຂອງຊາດຢ່າງກວ້າງຂວາງ. ນອກຈາກຄວາມຈິງທີ່ວ່າມັນລະເມີດຖະແຫຼງການລັດຖະທຳມະນູນ (Constitutional Declaration) ແລ້ວ, ການຕັດສິນໃຈຂອງສະພາປະທານາທິບໍດີ ຍັງເປັນບາດກ້າວທີ່ຮ້າຍແຮງ ແລະຜິດພາດ; ພວກເຮົາຮຽກຮ້ອງໃຫ້ສະພາປະທານາທິບໍດີ ຖອນການຕັດສິນໃຈນີ້ທັນທີ ແລະ ຂໍຢືນຢັນວ່າມັນບໍ່ຖືກຕ້ອງ."

ເມື່ອວັນອາທິດທີ 11 ສິງຫາ, ສະພາປະທານາທິບໍດີ ໄດ້ອອກຄຳຕັດສິນໃຈທີ່ຈະສ້າງຕັ້ງອົງການໃໝ່ເພື່ອດຳເນີນການ ແລະ ຄວບຄຸມການລົງປະຊາມະຕິ ແລະ ການສອບຖາມທົ່ວປະເທດ.

ລີບີເປັນປະເທດທີ່ອຸດົມສົມບູນໄປດ້ວຍນ້ຳມັນ ຖືກແບ່ງແຍກທາງດ້ານການເມືອງລະຫວ່າງລັດຖະບານຝ່າຍຕາເວັນອອກ ແລະ ຝ່າຍຕາເວັນຕົກ, ລັດຖະບານແຕ່ລະຝ່າຍ ໄດ້ຮັບການສະໜັບສະໜູນຈາກກຸ່ມປະກອບອາວຸດ ແລະ ກອງກຳລັງເຄິ່ງທະຫານ (militia).

**ແຫຼ່ງຂ່າວ: ຊິນຮວາ**

ເຝົ້າໄວ້ ໄດ້ບົດຮຽນ

# ມາດຕະການຄຸ້ມຄອງ ແລະ ຄວບຄຸມສື່ສັງຄົມອອນລາຍ

❖ ວິເສດ ສະແຫວງສຶກສາ

ພາຍໃຕ້ຫົວຂໍ້ບົດຄວາມຂ້າງເທິງນີ້, ຜູ້ຂຽນໄດ້ຈັດສັນກັ່ນຕອງ 2 ເຫດການທີ່ເກີດຂຶ້ນໃນຕ່າງປະເທດທີ່ພົວພັນກັບສື່ສັງຄົມອອນລາຍ ເພື່ອເບິ່ງໄວ້ເປັນບົດຮຽນກ່ຽວກັບມາດຕະການຄຸ້ມຄອງ ແລະ ຄວບຄຸມເຄືອຂ່າຍສື່ສັງຄົມອອນລາຍ. ສອງເຫດການທີ່ກ່າວມາຂ້າງເທິງນັ້ນ ເກີດຂຶ້ນຢູ່ປະເທດເຢຍລະມັນ ເມື່ອປະມານ 5 ປີຜ່ານມາ ແລະ ຢູ່ປະເທດມາເລເຊຍ ໃນທ້າຍເດືອນກໍລະກົດ ປີ 2024 ນີ້ເອງ.

ທີ່**ປະເທດເຢຍລະມັນ** ເຫດຮ້າຍທີ່ຖືກບັນທຶກເພາະໃນເຄືອຂ່າຍສັງຄົມເປັນເວລາຊ້ານານໄດ້ລະເບີດຂຶ້ນໃນເດືອນຕຸລາ 2019 ໃນຮູບການໃຊ້ຄວາມຮຸນແຮງໂດຍກຸ່ມຂວາຈັດທີ່ໄດ້ໃຊ້ອາວຸດປືນບຸກຍິງຜູ້ສະແຫວງບຸນພາຍໃນໂບດຊຸມຊົນຊາວຢິວ ເຮັດໃຫ້ມີຜູ້ເສຍຊີວິດ 2 ຄົນ ແລະ ບາດເຈັບອີກຈຳນວນໜຶ່ງ. ທາງການເຢຍລະມັນໄດ້ສະຫຼຸບວ່າເຫດຮ້າຍດັ່ງກ່າວ ເກີດມາຈາກກະແສຄວາມຄຽດຊັງຕໍ່ຊາວຢິວ ເຊິ່ງຖືກເຜີຍແຜ່ຜ່ານສື່ສັງຄົມອອນລາຍໂດຍກຸ່ມຫົວຮຸນແຮງ. ຕໍ່ມາໃນທ້າຍເດືອນກຸມພາ 2020, ຄືປະມານ 4 ເດືອນຫຼັງຈາກເຫດການບຸກຍິງພາຍໃນໂບດຊາວຢິວ, ລັດຖະສະພາເຢຍລະມັນ ກໍໄດ້ລົງມະຕິຮັບຮອງເອົາກົດໝາຍຕ້ານລັດທິຫົວຮຸນແຮງຂວາຈັດສະບັບປັບປຸງ ທີ່ໄດ້ປັບຂຶ້ນໂທດຕັດອິດສະຫຼະພາບຕໍ່ຜູ້ກະທຳຜິດ ຈາກ 1 ປີ ໃນເມື່ອກ່ອນມາເປັນ 3 ປີ. ຕາມກົດໝາຍສະບັບເກົ່າ, ສ່ວນໃຫຍ່ທາງການຈະສັ່ງໃຫ້ອົງການສື່ທີ່ກ່ຽວຂ້ອງລຶບຂໍ້ຄວາມທີ່ມີເນື້ອໃນຍຸຍົງສົ່ງເສີມຄວາມຄຽດຊັງລະຫວ່າງຄົນໃນສັງຄົມອອກ ແຕ່ໃນກົດໝາຍສະບັບປັບປຸງນີ້ ຜູ້ໃຫ້ບໍລິການເຄືອຂ່າຍສື່ສັງຄົມອອນລາຍ ຕ້ອງໄດ້ລາຍງານລະອຽດກ່ຽວກັບທຸກໆການເຜີຍແຜ່ຂໍ້ຄວາມທີ່ໄດ້ມາຈາກອົງການຈັດຕັ້ງທີ່ຜິດກົດໝາຍ, ລາຍງານທຸກໆເນື້ອໃນທີ່ຈະນຳໄປສູ່ການໃຊ້ຄວາມຮຸນແຮງ ແລະ ຄວາມຄຽດຊັງ ເຊິ່ງເປັນອັນຕະລາຍຕໍ່ປະເທດຊາດ. ກົດໝາຍໃຫ້ສິດເຈົ້າໜ້າທີ່ເພື່ອເຂົ້າເຖິງເລກລະຫັດ ແລະ ລາຍລະອຽດຂອງຜູ້ໃຊ້ບໍລິການເຄືອຂ່າຍ. ພິເສດໄປກວ່ານັ້ນ ກົດໝາຍສະບັບປັບປຸງ ຍັງໄດ້ກຳນົດໃຫ້ມີການຮ້ອງຟ້ອງເຖິງຂັ້ນສານ ກ່ຽວກັບຄະດີເຜີຍແຜ່ຂໍ້ຄວາມທີ່ສ້າງຄວາມຄຽດຊັງ ແລະ ຄວາມວຸ້ນວາຍໃນສັງຄົມ. ທ່ານ ນາງ ຄຣິດສະຕີນ ລຳເບັດ ລັດຖະມົນຕີກະຊວງຍຸຕິທຳເຢຍລະມັນໃນເວລານັ້ນ ໄດ້ເວົ້າກ່ຽວກັບມາດຕະການຕ້ານກຸ່ມຫົວຮຸນແຮງວ່າ“ຕ້ອງເລີກຮື້ໂຄດເຫງົ້າຂອງລັດທິໃຊ້ຄວາມຮຸນແຮງໃຫ້ໄດ້ຢ່າງເດັດຂາດ!”.

ຢູ່**ມາເລເຊຍ** ມາດຕະການຄຸ້ມຄອງ ແລະ ຄວບຄຸມເຄືອຂ່າຍສື່ສັງຄົມອອນລາຍນັ້ນ ມີເປົ້າໝາຍ “ປ້ອງກັນໄວ້ລ່ວງໜ້າ” ຫຼື “ກັນດີກວ່າແກ້”. ຂ່າວຕ່າງປະເທດໃນທ້າຍເດືອນກໍລະກົດປີນີ້ ໃຫ້ຮູ້ວ່າ ທາງການມາເລເຊຍ ໄດ້ອອກລະບຽບການໃໝ່ທີ່ກຳນົດໃຫ້ບັນດາບໍລິສັດເຄືອຂ່າຍສື່ສັງຄົມອອນລາຍຕ້ອງໄດ້ຍື່ນຄຳຮ້ອງຂໍໃບອະນຸຍາດເຄື່ອນໄຫວໂດຍມີລາຍລະອຽດວ່າ: ບັນດາບໍລິສັດສື່ສັງຄົມປະເພດສົ່ງຂໍ້ຄວາມສັ້ນ ທີ່ມີລູກຄ້າຢ່າງໜ້ອຍ 8 ລ້ານຄົນ ຫຼື ຄິດເປັນ 25% ຂອງພົນລະເມືອງມາເລເຊຍ ຕ້ອງໄດ້ຍື່ນຂໍອະນຸຍາດຈາກເຈົ້າໜ້າທີ່. ເງື່ອນໄຂທີ່ວ່ານີ້ກວມເອົາເຟດບຸກ. ອິນສະຕາແກຣມ, ວັອດແອັບ, ຢູທູບ, ກູເກີນ, ຕິກຕັອກ, ເຕເລແກຣມ ແລະ ເອັກສ໌ ການຍື່ນເອກະສານຂໍອະນຸຍາດໄດ້ເລີ່ມຂຶ້ນແລ້ວນັບແຕ່ວັນທີ 1 ສິງຫາ 2024, ສ່ວນໃບອະນຸຍາດຈະເລີ່ມມີຜົນບັງຄັບໃຊ້ນັບແຕ່ວັນທີ 1 ມັງກອນ 2025 ເປັນຕົ້ນໄປ. ທາງການມາເລເຊຍ ໃຫ້ຮູ້ວ່າ ລະບຽບການທີ່ກຳນົດໃຫ້ຂຶ້ນທະບຽນສື່ສັງຄົມອອນລາຍ ຈະຊ່ວຍສ້າງລະບົບນິເວດອອນລາຍທີ່ປອດໄພ ແລະ ໃຊ້ວຽກດີຂຶ້ນກວ່າເດີມ. ລະບຽບການຍັງໄດ້ກຳນົດໂທດປັບໃໝສູງສຸດ 500,000 ຣິງກິດຕໍ່ບໍລິສັດທີ່ລະເມີດລະບຽບການ. ນອກຈາກນີ້, ທາງການມາເລເຊຍ ຍັງມີເຄື່ອງມືຄຸນນະພາບສູງເພື່ອລຶບບັນດາເນື້ອໃນທີ່ເປັນອັນຕະລາຍໃນເຄືອຂ່າຍສື່ສັງຄົມອອນລາຍ.

ຕາມພາສາ ກາຕູນ



ໂດຍ : ພູຜາ

ທຳມະພາສາ ຜ່ານສຽງຫົວ



# ຂຶ້ນລົດເມ

#ບ່າວກະບື

**ທ້າວ**ທອງ ຕ້ອງການເດີນທາງໄປສະຫວັນນະເຂດ. ເຂົາເບິ່ງໄປຄິວລົດສາຍໃຕ້ ແລະ ເຫັນຄົນຂັບລົດຢືນຢູ່ໃກ້ໆລົດບັດພວມຮ້ອງປະກາດອີ່ຄົນໂດຍສານທີ່ຈະໄປສະຫວັນນະເຂດ. ທ້າວທອງລີ່ວຂຶ້ນລົດ. ຕໍ່ມາ, ເຂົາສັງເກດເຫັນວ່າ ປ້າຍລົດບັດຄັນນັ້ນບອກວ່າ ເປັນລົດຫຼວງພະບາງ ແທນທີ່ຈະເປັນລົດໂດຍສານສາຍສະຫວັນນະເຂດ. ເຂົາລົງຈາກລົດ ເພື່ອຖາມຄົນຂັບວ່າລົດຄັນນັ້ນຊີໄປໃສກັນແທ້. ຄົນຂັບຕອບຢ້ຳຄືນວ່າ ລົດຄັນນີ້ຈະໄປສະຫວັນນະເຂດແທ້, ບໍ່ແມ່ນໄປຫຼວງພະບາງ. ທ້າວທອງທັກທ້ວງຂຶ້ນວ່າ ປ້າຍລົດນັ້ນຂຽນຜິດ, ພາໃຫ້ຜູ້ໂດຍສານສັບສົນ. ແລ້ວກໍມີຄຳຕອບບຸບປັບມາຈາກຜູ້ຂັບວ່າ:

“ແມ່ນເຈົ້າຕ້ອງການນັ່ງປ້າຍລົດ ຫຼື ຕ້ອງການນັ່ງໃນລົດກັນແທ້?”

# Boarding A Bus

#BAOKBU

Wanting to travel to Savannakhet, Thong headed to the Southern Bus Terminal. He saw a conductor standing near a bus calling out for passengers for Savannakhet. Thong rushed towards the bus and got in. Later, he observed that the signboard of the bus indicated that the bus would go to Luang-prabang instead of Savannakhet. He got down to confirm the correct destination of the bus from the same conductor. He stressed that the bus was going to Savannakhet, not to Luangprabang. Thong protested that the wrong signboard on the bus which was confusing passengers. Pat came the reply:

“You want to sit on the signboard or in the bus?”

ຄະນະກຳມະການລະດັບຊາດ
ປັບປຸງລັດຖະທຳມະນູນ
ລັດຖະທຳມະນູນ
ຂໍເຊີນຊວນບັນດາທ່ານພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ ແລະ ພີ່ນ້ອງຊາວລາວທີ່ອາໄສຢູ່ຕ່າງປະເທດ ຈົ່ງປະກອບຄວາມຄິດເຫັນຕໍ່ການປັບປຸງລັດຖະທຳມະນູນ ສະບັບປີ 2015 ເຊິ່ງຄະນະຮັບຜິດຊອບໄດ້ຈັດຕັ້ງໜ່ວຍງານຮັບຄວາມຄິດເຫັນ, ຂໍ້ສະເໜີຜ່ານອີເມວ: laocon@nalao.la

ທະນາຄານພັດທະນາລາວ
LDB Bank

ຜູ້ຊີ້ນຳ
ທ່ານ ສິງຄຳ ວົງພະຈັນ

ຄະນະຊ່ຽວຊານທີ່ປຶກສາ
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

ຄະນະບັນນາທິການ
ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

ກອງບັນນາທິການ
ທ່ານ ນາງ ວັນນາລົມ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ

ອອກແບບ - ຈັດໜ້າ
ທ່ານ ນາງ ກຸກກິກ ບຸດດາໄຊ